ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ແຂວງຄຳມ່ວນ**

**ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ**

# ແຜນກຽມພ້ອມຕອບໂຕ້ໄພນ້ຳຖ້ວມ ແຂວງຄຳມ່ວນ





**ສົກປີ : 2008 - 2009**

## ສາລະບານ


| ຫົວຂໍ້ເອກະສານ | | ໜ້າ |
|---|---|---|
| | ບ່ອນອີງ | 01 |
| 1. | ພາກສະເໜີ | 01 |
| 1.1 | ສະພາບຄວາມເປັນມາ | 01 |
| 1.2 | ປະສົບການໄພນ້ຳຖ້ວມ | 01 |
| 1.3 | ຜົນກະທົບຂອງໄພນ້ຳຖ້ວມ | 02 |
| ກ. | ດ້ານບວກ | 02 |
| ຂ. | ດ້ານລົບ | 02 |
| 2. | ຈຸດປະສົງ ແລະ ຍຸດທະສາດ | 03 |
| 2.1 | ຈຸດປະສົງ | 03 |
| 2.2 | ຍຸດທະສາດ | 03 |
| 2.3 | ຄາດໝາຍລວມ | 03 |
| 3. | ຄວາມຮັບຜິດຊອບ ແລະ ສິດຂອບເຂດຂອງແຜນການ | 03 |
| 3.1 | ພາລະບົດບາດຂອງຄະນະກຳມະການຕຸ້ມຄອງໄພພິບັດຂັ້ນແຂວງ | 03 |
| - | ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ | 04 |
| 4. | ໄລຍະເວລາໃນການຈັດຕັ້ງປະຕິບັດ | 05 |
| 5. | ສະເໜີຫຍໍ້ກ່ຽວກັບສະພາບລວມຂອງແຂວງ | 05 |
| 5.1 | ພື້ນທີ່ ແລະ ປະຊາກອນ | 05 |
| 5.2 | ຈຸດພິເສດ ແລະ ພູມສັນຖານ | 05 |
| 5.3 | ການດຳລົງຊີວິດຂອງປະຊາຊົນ | 06 |
| 5.4 | ອັດຕາລາຍຮັບ ແລະ ການຂະຫຍາຍຕົວ | 06 |
| - | ແຜນທີ່ແຂວງຄຳມ່ວນ | 06 |
| 6. | ສະພາບພື້ນຖານໂຄງລ່າງ | 07 |
| 6.1 | ດ້ານໂຍທາທິການຂົນສົ່ງ | 07 |
| 6.2 | ດ້ານວັດທະນາທຳ - ສັງຄົມ | 08 |
| 7. | ວິເຄາະຄວາມອາດສາມາດ ຜູ້ຖືກເຄາະຮ້າຍໄດ້ງ່າຍ ແລະ ໄພອັນຕະລາຍ | 08 |
| 7.1 | ສາຍເຫດເກີດໄພນ້ຳຖ້ວມ | 08 |
| 8. | ຜົນກະທົບດ້ານການດຳລົງຊີວິດ ແລະ ເສດຖະກິດ-ສັງຄົມ | 08 |
| ກ. | ດ້ານການດຳລົງຊີວິດ | 08 |
| ຂ. | ດ້ານເສດຖະກິດ-ສັງຄົມ | 09 |
| - | ຜົນເສຍຫາຍໄພນ້ຳຖ້ວມປີ 2005 | 09 |
| 9. | ການຕອບໂຕ້ໄລຍະຜ່ານມາ | 12 |

| | | |
|---|---|---|
| 10. | ຄວາມອາດສາມາດ ແລະ ແຫຼ່ງວັດຖຸ................................................................ | 12 |
| 10.1 | ແຜນຄວາມຕ້ອງການດ້ານອຸປະກອນ................................................................ | 12 |
| 11. | ກົງຈັກການຈັດຕັ້ງສຳລັບວຽກງານຄຸ້ມຄອງໄພພິບັດ................................................................ | 13 |
| 11.1 | ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ................................................................ | 13 |
| 12 | ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຄະນະກຳມະການ(ກ່ອນ ລະຫວ່າງ ແລະ ຫຼັງ )............ | 14 |
| 13 | ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງກອງເລຂາ (ກ່ອນ ລະຫວ່າງ ແລະ ຫຼັງ )..................... | 15 |
| 14 | ທີມງານກູ້ໄພພິບັດ ແລະ ໜ້າທີ່ຮັບຜິດຊອບແຕ່ລະຂອງຂະແໜງ................................................................ | 15 |
| 15 | ຫ້ອງການຄຸ້ມຄອງໄພນ້ຳຖ້ວມ................................................................ | 18 |
| 16 | ມາດຕະການກຽມພ້ອມຕ້ານໄພນ້ຳຖ້ວມ................................................................ | 18 |
| 16.1 | ກິດຈະກຳການກຽມພ້ອມ................................................................ | 18 |
| 17 | ມາດຕະການຕອບໂຕ້................................................................ | 19 |
| 17.1 | ກິດຈະກຳການຕອບໂຕ້ ................................................................ | 19 |
| 18 | ການປັບປຸງເພື່ອໃຫ້ຄືນສູ່ສະພາບເດີມ................................................................ | 19 |
| 18.1 | ກິດຈະກຳການປັບປຸງ................................................................ | 19 |
| 19 | ມາດຕະການຫຼຸດຜ່ອນໄພນ້ຳຖ້ວມ................................................................ | 19 |
| 19.1 | ກິດຈະກຳການກຽມພ້ອມທາງດ້ານໂຄງສ້າງ................................................................ | 19 |
| 19.2 | ກິດຈະກຳການກພ້ອມທີ່ບໍ່ແມ່ນທາງດ້ານໂຄງສ້າງ................................................................ | 20 |
| 20 | ເລກທໂທລະສັບທີ່ສຳຄັນ................................................................ | 20 |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------------

ແຂວງຄຳມ່ວນ ເລກທີ............../ຣສສຂ
ພະແນກແຮງງານ ແລະ ສະຫັວດດີການ-ສັງຄົມແຂວງ ຄຳມ່ວນ,ວັນທີ.........................
ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ

# ແຜນກຽມພ້ອມຕ້ານໄພນ້ຳຖ້ວມປະຈຳປີ : 2009 - 2010

*ບ່ອນອີງ*

ອີງຕາມ : ແຜນຍຸດທະສາດການຫ້າງຫາກະກຽມປອ້ງກັນໄພພິບັດແຂວງຄຳມ່ວນ ແຕ່ປີ 2006-2010.

ອີງຕາມ : ຂໍ້ຕົກລົງຂອງທ່ານ ເຈົ້າແຂວງໆຄຳມ່ວນ ສະບັບເລກທີ 0869/ຈຂຄມ , ລົງວັນທີ 19 ສິງຫາ 2008 ວ່າດ້ວຍແຕ່ງຕັ້ງຄະນະກຳມະການປ້ອງກັນໄພພິບັດ ແລະ ຕ້ານແລ້ງຕ້ານຖ້ວມຂັ້ນແຂວງໆຄຳມ່ວນ

ເພື່ອເປັນບອ່ນອີງໃຫ້ແກ່ການເຄື່ອນໄຫວຈັດຕັ້ງປະຕິບັດ ກ່ຽວກັບວຽກງານຫ້າງຫາກະກຽມປອ້ງກັນໄພນ້ຳຖ້ວມຢູ່ລະດັບຂັ້ນແຂວງ ທາງຄະນະກຳມະການຄຸ້ມຄອງໄພພິບັດຂອງແຂວງ ໄດ້ວາງແຜນການ,ມາດຕະການກຽມພອ້ມແຕ່ລະດ້ານດັ່ງນີ້:

## 1. ພາກສະເໜີ

### 1.1 ສະພາບຄວາມເປັນມາ

ແຂວງຄຳມ່ວນ ຕັ້ງຢູ່ພາກກາງຂອງ ສປປ ລາວ ແລະ ເປັນແຂວງມັກເກີດມີໄພທຳມະຊາດ,ໄພພິບັດ ເຊັ່ນ : ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ລົມລະດູການພັດຜ່ານ ຈາກນັ້ນໄພອັນຕະລາຍທີ່ຕາມມາບາງປີຍັງມີພະຍາດລະບາດຕໍ່ຄົນ ແລະ ສັດ ນອກຈາກໄພພິບັດທຳມະຊາດນີ້ແລ້ວຍັງມີໄພພິບັດຈາກມະນຸດສ້າງຂຶ້ນອີກ ເຊັ່ນ:ລະເບີດບໍ່ທັນແຕກທີ່ຍັງຕົກຄ້າງຢູ່ພື້ນທີ່ເມືອງຈຳນວນໜຶ່ງທີ່ເປັນສະມໍລະພູມໃນເມື່ອກອ່ນຄື: ເມືອງມະຫາໄຊ, ເມືອງຍົມມະລາດ ແລະ ເມືອງບົວລະພາ ປະມານ 30 % ລູກລະເບີດບໍ່ທັນແຕກທີ່ຍັງຕົກຄ້າງ.

### 1.2 ປະສົບການໄພນ້ຳຖ້ວມ

ຜ່ານເຫດການ ແລະ ຂໍ້ມູນທີ່ເກັບກຳໄດ້ຂອງໄພນ້ຳຖ້ວມຢູ່ ແຂວງຄຳມ່ວນແຕ່ປີ 2000 ຫາປີ 2008 ເຫັນວ່າການເກີດໄພນ້ຳຖ້ວມແຕ່ລະປີແມ່ນມີຄວາມແຕກຕ່າງ ບາງປີມີສະພາບ ຖ້ວມຄອ່ຍບາງປີ

ກໍ່ຮຸນແຮງເຊັ່ນ:ປີ 2005 ປະຊາຊົນຈຳນວນ 26.219 ຄອບຄົວ 517 ບ້ານ ,ມີ 144.097 ຄົນ ທີ່ຖືກກະທົບ ໃນນັ້ນ, ມີເນື້ອທີ່ນາປີຖືກເສຍຫາຍ 22.991 ຮຕ ແລະ ເນື້ອທີສວນເສຍຫາຍ 53.361 ຮຕ.

ສຳລັບປີ 2008 ແຂວງຄຳມ່ວນ ມີ 6 ເມືອງ ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມຄື: ເມືອງທ່າແຂກ,ເມືອງ,ໜອງບົກ ,ເຊບັ້ງໄຟ ,ມະຫາໄຊ ,ຍົມມະລາດ ແລະ ເມືອງຫີນບູນ ມີ 376 ບ້ານ ຈຳນວນ 14.762 ຄອບຄົວຈຳນວນ 76.453 ຄົນ ຍິງ 38.862 ຄົນ ທີ່ໄດ້ຮັບຜົນກະທົບ,ເນື້ອທີ່ນາປີເສຍຫາຍ 11.884 ເຮັກຕາ ເນື້ອທີ່ສວນ 1.605,5ເຮັກຕາ, ຄວາຍຕາຍ 40 ໂຕ, ງົວ 96 ໂຕ,ແບ້ 26 ໂຕ ແລະ ສັດປີກຈຳນວນຫລາຍພັນໂຕ ນອກຈາກນັ້ນ ຍັງມີຊົນລະປະທານ 48 ແຫ່ງ,ເສັ້ນທາງຖືກເຊາະເຈື່ອນຍາວ 27,00 ກວ່າກິໂລແມັດ,ໂຮງຮຽນຖືກນ້ຳຖ້ວມ 41 ແຫ່ງ,ນ້ຳສ້າງ 495 ໜ່ວຍຖືກຖ້ວມ, ນ້ຳບາດານ 150 ບໍ່ ຄິດເປັນມູນຄ່າເສຍຫາຍທັງຫມົດຈຳນວນ 31 ຕື້ກວ່າກີບ.

### 1.3 ຜົນກະທົບຂອງໄພນ້ຳຖ້ວມ

### ກ. ດ້ານບວກ

ຖ້າພວກເຮົາເວົ້າເຖິງໄພນ້ຳຖ້ວມ ແລະ ຜົນກະທົບຂອງມັນ ພວກເຮົາມັກເນັ້ນໜັກເຖິງແຕ່ຜົນເສຍຫາຍເທົ່ານັ້ນ ແຕ່ຖ້າເຮົາເບິ່ງໃນມູມມອງໃໝ່ ຈະເຫັນວ່າການທີ່ມີນ້ຳຖ້ວມນັ້ນມັນໄດ້ນຳເອົາ ຄວາມອຸດົມສົມບູນທາງດ້ານນິເວດວິທະຍາ . ຄວາມດຸ່ນດ່ຽງທາງດ້ານການເຄື່ອນຍ້າຍຂອງປາ ແລະ ນຳເອົາຝຸ່ນທຳມະຊາດມາສູ່ດິນທີ່ຖືກນ້ຳຖ້ວມຢ່າງຫຼວງຫຼາຍເຮັດໃຫ້ດິນທີ່ຊຸມໂຊມກາຍເປັນດິນທີ່ອຸດົມສົມບູນໄປດ້ວຍແຮທາດຕ່າງໆ ເພາະສະນັ້ນນ້ຳຖ້ວມມັນກໍ່ເປັນສິ່ງທີ່ດີສຳລັບພວກເຮົາເຊັ່ນກັນ ແຕ່ແນວໃດກໍ່ຕາມພວກເຮົາຄວນເບິ່ງຜົນກະທົບທັງສອງດ້ານຄຽງຄູ່ກັນ ເພາະມັນແມ່ນລະບົບວົງຈອນຈາກທຳມະຊາດຂອງໄພນ້ຳຖ້ວມ

### ຂ. ດ້ານລົບ

ມັນໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ໂດຍສະເພາະແມ່ນໄດ້ທຳລາຍເຄື່ອງປູກຂອງຝັງ, ນາເຂົ້າ, ສັດລ້ຽງ ແລະ ຊັບສິນສ່ວນລວມ ນອກຈາກນັ້ນກໍ່ຍັງມີພະຍາດລະບາດຕໍ່ຄົນ ແລະ ສັດ , ພ້ອມກີດຂວາງການສ້າງສາພັດທະນາເສດຖະກິດສັງຄົມໃນຂົງເຂດນັ້ນ ເຊິ່ງເຮັດໃຫ້ມີການສູນເສຍຫາຍທາງດ້ານງົບປະມານ ການຟື້ນຟູຢ່າງຫຼວງຫຼາຍ ຕໍ່ກັບຄວາມເສຍຫາຍຈາກໄພນ້ຳຖ້ວມມັນແມ່ນຂື້ນ ກັບການຖ້ວມດົນ ຫຼື ຖ້ວມຊ້າ , ເນື້ອທີ່ຂອງການ ຖ້ວມໜ້ອຍ ຫຼື ຫຼາຍ ແລະ ຄວາມໄວຂອງ ນ້ຳຖ້ວມໃນຂົງເຂດນັ້ນ

- **ຕາຕະລາງຂໍ້ມູນເນື້ອທີ່ທຳການຜະລິດຖືກນ້ຳຖ້ວມແຕ່ສົກປີ : 2000 - 2008**

| ລ/ດ | ເນື້ອໃນລາຍການ | ເນື້ອທີນາ ( ຮຕ ) | ເນື້ອທີປູກຝັງ ຮຕ ) |
|---|---|---|---|
| 1 | ນ້ຳຖ້ວມປີ 2000 | 19,978 | 48,225 |

| | | | |
|---|---|---|---|
| 2 | ນ້ຳຖ້ວມປີ 2001 | 14,440 | 49,397 |
| 3 | ນ້ຳຖ້ວມປີ 2002 | 11,430 | 52,258 |
| 4 | ນ້ຳຖ້ວມປີ 2003 | 00 | 50,760 |
| 5 | ນ້ຳຖ້ວມປີ 2004 | 11,850 | 51,474 |
| 6 | ນ້ຳຖ້ວມປີ 2005 | 22.991 | 53,361 |
| 7 | ນ້ຳຖ້ວມປີ 2006 | 00 | 51.515 |
| 8 | ນ້ຳຖ້ວມປີ 2007 | 4.368 | 52.783 |
| 9 | ນ້ຳຖ້ວມປີ 2008 | 11.884 | 16.055 |

## 2 . ຈຸດປະສົງ ແລະ ຍຸດທະສາດ

### 2.1 ຈຸດປະສົງ

1. ເພື່ອສ້າງຄວາມຮູ້ພື້ນຖານ ດ້ານວຽກງານທ້າງຫາກະກຽມປ້ອງກັນໄພນ້ຳຖ້ວມໃຫ້ປະຊາຊົນບັນດາເຜົ່າຄູ ອາຈານ ແລະ ນັກຮຽນບອ່ນທີ່ມີຄວາມສ່ຽງທີ່ມັກເກີດນ້ຳຖ້ວມໄດ້ຮັບຮູ້ເຂົ້າໃຈ ເພື່ອຊອກວິທີການກົນໄກແກ້ໄຂບັນຫາໄພນ້ຳຖ້ວມທີ່ເກີດຂື້ນແຕ່ລະຄັ້ງດ້ວຍເຂົາເຈົ້າເອງ.

2. ສ້າງໃຫ້ພະນັກງານຂອງລັດ ລະດັບແຂວງ ແລະ ລະດັບເມືອງ ມີຄວາມຮູ້ພື້ນຖານດ້ານວຽກງານຄຸ້ມຄອງໄພນ້ຳຖ້ວມ ດ້ານຂອດການປະສານງານເວລາເກີດເຫດການສຸກເສີນ ການເຄື່ອນໄຫວໂຄສະນາການນຳພາ ການປຸກລະດົມການເຂົ້າຮ່ວມການຕອບໂຕ້ ເວລາເກີດນ້ຳຖ້ວມ.

3. ແນ່ໃສ່ຫລຸດຜອ່ນຄວາມຮຸນແຮງຈາກໄພນ້ຳຖ້ວມ ທີ່ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ , ສັດ
ລ້ຽງ ແລະ ຕໍ່ການພັດທະນາພື້ນຖານໂຄງລ່າງ

### 2.2 ຍຸດທະສາດ

1. ເຮັດໃຫ້ທົ່ວສັງຄົມ ມີຄວາມປອດໄພໂດຍພື້ນຖານ ສາມາດຫຼຸດຜ່ອນຜົນເສຍຫາຍຕໍ່ຊີວິດ, ເສດຖະກິດ, ຊັບສິນຂອງລັດ ແລະ ປະຊາຊົນເທື່ອລະກ້າວ

2. ເຮັດໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໄດ້ຮັບການຊ່ວຍເຫຼືອຢ່າງທ່ວງທັນເວລາ ແລະ ຮັບປະກັນການຟື້ນຟູການດຳລົງຊີວິດຂອງປະຊາຊົນກັບຄືນສູ່ສະພາບເດີມໂດຍໄວ

### 2.3 ຄາດໝາຍລວມ

1. ສາມາດຈັດຕັ້ງປະຕິບັດວຽກງານຕອບໂຕ້ໄພນ້ຳຖ້ວມຢ່າງທັນເວລາ ພ້ອມເຄື່ອນໄຫວຖືກຕ້ອງສອດຄ່ອງກັບພາລະບົດບາດຂອງແຕ່ລະຂະແໜງການ .

2. ເຊື່ອມແຜນຄຸ້ມຄອງໄພພິບັດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງເທື່ອລະກ້າວ

## 3. ຄວາມຮັບຜິດຊອບ ແລະ ສິດຂອງເຂດຂອງແຜນການ

### 3.1 ພາລະບົດບາດຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ

- **ສິດ ແລະ ໜ້າທີ່ ປະທານຊີ້ນຳຄະນະກຳມະການຄຸ້ມຄອງໄພພິບັດ.**

1. ຮຽກປະຊຸມສາມັນ ແລະ ວິສາມັນເວລາມີເຫດການໄພພິບັດ .
2. ຊີ້ນຳລວມໃນການທ່າງທາກະກຽມກ່ຽວກັບແກ້ໄຂບັນຫາໄພພິບັດ ແລະ ການຕ້ານແລ້ງ-ຕ້ານຖ້ວມ ເພື່ອລາຍງານເຈົ້າແຂວງ
3. ມີສິດແຕ່ງຕັ້ງແລະມອບໝາຍວຽກໃຫ້ ຮອງປະທານວ່າການແທນໃນເວລາຕິດພາລະກິດທາງ ລັດຖະການ.

- **ວ່າດ້ວຍໜ້າທີ່ຂອງຮອງປະທານຊີ້ນຳຄະນະກຳມະການຄຸ້ມຄອງໄພພິບັດ.**

1. ປະຕິບັດໜ້າທີ່ຕາມການມອບໝາຍຂອງປະນຄະນະຊີ້ນຳ.
2. ສັງລວມຂໍ້ມູນສະພາບຂອງການເກີດໄພພິບັດ ທີ່ເກີດຂື້ນແຕ່ລະຄັ້ງເພື່ອລາຍງານທ່ານປະທານ

- **ວ່າດ້ວຍໜ້າທີ່ຮັບຊອບຂອງຄະນະກຳມະການ.**

1. ຄະນະກຳມະການຈາກຫ້ອງວ່າການປົກຄອງແຂວງ , ພະແນກກະສິກຳ-ປ່າໄມ້,ພະແນກ ຄຂປກ ແລະ ຖະແຫຼງຂ່າວ ວັດທະນະທຳ ມີໜ້າທີ່ຈັດຕັ້ງດຳເນີນການຕິດຕາມ, ແຈ້ງຂ່າວ, ເຕືອນໄພ ທັງອອກຂໍ້ແນະນຳໃຫ້ປະຊາຊົນບັນດາເຜົ່າຮູ້ກ່ອນລ່ວງໜ້າ ເພື່ອມີການກະກຽມ
2. ຄະນະກຳມະການພະແນກສຶກສາມີໜ້າທີ່ຈັດຕັ້ງປະຕິບັດການອົບຮົມໃຫ້ແກ່ຄູອາຈານ ແລະ ນັກຮຽນໃຫ້ເຂົາເຈົ້າຮັບຮູ້ເຂົ້າໃຈ ກ່ຽວກັບການທ່າງທາກະກຽມປ້ອງກັນໄພິບັດ ພ້ອມກັບນຳເອົາວຽກງານປ້ອງກັນໄພພິບັດ ສອດເຂົ້າໃນວິຊາການຮຽນ ການສອນຢູ່ແຕ່ລະໂຮງຮຽນ.
3. ຄະນະກຳມະການຈາກພະແນກສາທາລະນະສຸກແຂວງ ມີໜ້າທີ່ຂື້ນແຜນການ ແຕ່ງຕັ້ງໜ່ວຍວິຊາສະເພາະຮັບໃຊ້ໃຫ້ແກ່ການທ່າງທາກະກຽມຕ້ານໄພພິບັດ ໂດຍສະເພາະແມ່ນການຮັກສາປະຖົມພະຍາບານຂັ້ນຕົ້ນ .
4. ຄະນະກຳມະການຈາກກອງບັນຊາການ ປກຊ ແລະ ປກສ ແຂວງ ມີໜ້າທີ່ຈັດຕັ້ງນຳໃຊ້ກຳລັງ ເພື່ອເຂົ້າຮ່ວມຊ່ວຍໃນການເຄື່ອນຍ້າຍປະຊາຊົນອອກຈາກຂອບເຂດທີ່ມີໄພອັນຕະລາຍ ແລະ ຮັກສາຄວາມສະຫງົບ ໃນເມື່ອມີການຍົກຍ້ານເຄື່ອງຂອງ ແລະ ຊັບສິນມີຄ່າຂອງປະຊາຊົນ
5. ຄະນະກຳມະການຈາກພະແນກການເງິນ,ພະແນກແຜນການ -ການລົງທືນແຂວງ,ພະແນກອຸດສະຫະກຳ-ການຄ້າແຂວງ ແລະ ຫ້ອງການກາແດງແຂວງ ມີໜ້າທີ່ຈັດຕັ້ງປຸກລະດົມຂົນຂວາຍ ຊອກຫາແຫຼ່ງທືນ ແລະ ເຄື່ອງຊ່ວຍເຫຼືອບັນເທົາທູກສຸກເສີນ .
6. ຄະນະກຳມະການຈາກອົງການຈັດຕັ້ງຊາວໜຸ່ມ ແລະ ແນວລາວສ້າງຊາດແຂວງ ມີໜ້າທີ່ຈັດຕັ້ງປຸກລະດົມກ້ອນກຳລັງເຂົ້າໃນການຊ່ວຍເຫຼືອສຸກເສີນ
7. ຄະນະກຳມະການຈາກພະແນກພະລັງງານບບໍ່ແຮ່ ມີໜ້າທີ່ກວດກາລະບົບຄວາມປອດໄພ ໃນບັນດາໂຮງຈັກ ໂຮງງານ ສິ່ງເສດເຫຼືອກະທົບໃສ່ສິ່ງແວດລ້ອມ
8. ຄະນະກຳມະການຈາກຫ້ອງການ ຊນສ ແຂວງ ມີໜ້າທີ່ຕິດຕາມສະພາບນ້ຳຝົນ , ລະດັບນ້ຳຂອງແລະສາຂາຕ່າງໆ ພ້ອມຕິດຕາມການປ່ຽນແປງທາງສະພາບດິນຟ້າອາກາດ ເພື່ອແຈ້ງເຕື່ອນ ແລະ ລາຍງານໄປຍັງທຸກໆພາກສ່ວນຊາບແຕ່ລະໄລຍະ
9. ຄະນະກຳມະການປ້ອງກັນໄພພິບັດ ແລະ ຄະນະກຳມະການຕ້ານແລ້ງຕ້ານຖ້ວມ ຂັ້ນແຂວງ ແນະນຳໃນການຈັດຕັ້ງປະຕິບັດຂອງທ້ອງຖິ່ນ , ເມືອງ , ບ້ານໃຫ້ລະອຽດ ແລະ ໃຫ້ມີຄວາມຮັບຜິດຊອບສູງ

- **ວ່າດ້ວຍບົດບາດ ແລະ ໜ້າທີ່ຂອງກອງເລຂາ.**

1. ຕິດຕາມ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ.
2. ເກັບກຳ,ສັງລວມຂໍ້ມູນ ໄພອັນຕະລາຍ,ໄພພິບັດຄວາມສາມາດ ແລະ ຄວາມຕ້ານທານ ຕ່ຳພາຍໃນແຂວງ, ລາຍງານໃຫ້ຄະນະຊີ້ນຳ ແລະ ໂຄງການ.
3. ເປັນເສນາທິການໃຫ້ແກ່ຄະນະກຳມະການປ້ອງກັນໄພພິບັດ ແລະ ຕ້ານແລ້ງ - ຕ້ານຖ້ວມ ຂັ້ນແຂວງ.
4. ຜູ້ປະຈຳການ ແລະ ປະສານງານກັບຄະນະກຳມະການຕ່າງໆ ເພື່ອຈັດຕັ້ງປະຕິບັດວຽກ ງານຄຸ້ມຄອງໄພບັດໃຫ້ມີປະສິດທິຜົນ.
5. ເປັນຜູ້ລົງຊ່ວຍເຫຼືອ ຄຄພມ ແລະ ຂັ້ນບ້ານໃນການເກັບກຳຂໍ້ມູນ ປະເມີນສະພາບໄພພິບັດໃນຊຸມ ຊົນ ແລະ ສະໜັບສະໜູນການວາງແຜນ ຫລຸດຜ່ອນຄວາມສ່ຽງຈາກໄພພິບັດ ໃນຂັ້ນບ້ານ.
6. ເຂົ້າຮ່ວມກອງປະຊຸມການວາງແຜນກະກຽມຮັບມືກັບໄພພິບັດ ແລະ ການຕ້ານແລ້ງ - ຕ້ານຖ້ວມ ສະຫຼຸບຜົນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການປະຈຳອາທິດ, ເດືອນ , ໄຕມາດ ແລະປະຈຳປີ ລາຍງານຄະນະຊີ້ນຳຂັ້ນແຂວງ ແລະໂຄງການຢ່າງເປັນປົກະຕິ.
7. ກອງເລຂາທີ່ຕັ້ງເປັນບ່ອນປະຈຳການຢູ່ພະແນກແຮງງານແລະສະຫວັດດີການສັງຄົມແຂວງ.

## 4 . ໄລຍະເວລາໃນການຈັດຕັ້ງປະຕິບັດ

- ວັນທີ່ 17 ພະຈິກ 2009 ຫາ ວັນທີ 17 ພະຈິກ 2010

## 5. ສະເໜີຫຍໍ້ກ່ຽວກັບສະພາບຂອງແຂວງ

### 5.1 ພື້ນທີ່ ແລະ ປະຊາກອນ

ແຂວງຄຳມ່ວນປະກອບມີ 9 ຕົວເມືອງ, ມີເນື້ອທີ່ທັງໝົດ 16.315 ກລມ2, ມີ 636 ບ້ານ, 63.996 ຄົວເຮືອນ, ມີພົນລະເມືອງ 338.390 ຄົນ, ຍິງ 171.536 ຄົນ .

- ທິດເໜືອ : ຕິດກັບແຂວງບໍລິຄຳໄຊ (ເມືອງຄຳເກີດ ແລະ ເມືອງປາກກະດິງ)
- ທິດໃຕ້ : ຕິດກັບແຂວງສະຫັວນນະເຂດ (ເມືອງວິລະບຸລີ ແລະ ເມືອງໄຊບູລີ)
- ທິດຕາວັນອອກ : ຕິດກັບ ສສ ຫວຽດນາມ
- ທິດຕາວັນຕົກ : ຕິດກັບປະເທດໄທ (ນະຄອນພະນົມ)

### 5.2 ຈຸດພິເສດ ແລະ ພູມສັນຖານ

ພູມສັນຖານມີສາຍພູຫລວງເປັນບ່ອນອີງ ລະດັບສູງກໍ່ຄ່ອຍໆລຸດລົງຕາມທິດເວັນອອກຫາທິດຕາເວັນຕົກ ໄດ້ແບ່ງອອກເປັນ 2 ເຂດລະບົບນິເວດຄື: ເຂດພູດອຍ ແລະ ເຂດທົ່ງພຽງ. ເຊິ່ງແຕ່ລະເຂດມີລັກສະນະພິເສດ ທາງດ້ານຊັບພະຍາກອນທຳມະຊາດແຕກຕ່າງກັນເຊັ່ນ:

- ***ເຂດພູດອຍ :*** ກວມເອົາ 35% ຂອງເນື້ອທີ່ທັງຫມົດໃນແຂວງ ກວມເອົາສ່ວນໜຶ່ງຂອງ ເມືອງນາກາຍ, ຍົມ ມະລາດ ແລະເມືອງບົວລະພາ, ເຊິ່ງພູມສັນຖານໄດ້ຖືກຕັດແບ່ງຢ່າງຈະແຈ້ງ ເປັນລ້ອງທີ່ແຄບນ້ອຍ ຍາວໄປຕາມ ສາຍນ້ຳຕ່າງໆ. ທິດຕາເວັນຕົກມີພູມສັນຖານເປັນທົ່ງກວ້າງ, ມີລັກສະນະລຸບ ໂນນເປັນຄື້ນສະລັບກັນ ເຮັດໃຫ້ນຳ ໄຫລສະດວກ ເໝາະສົມໃຫ້ແກ່ການປູກຕົ້ນໄມ້ກິນໝາກ, ຕົ້ນໄມ້ ອຸດສາຫະກຳໄລຍະຍາວ ແລະ ລ້ຽງສັດໃຫຍ່.
- ***ເຂດພູພຽງ*** : ກວມເອົາ 18,7% ຂອງເນື້ອທີ່ທົ່ວແຂວງ ກວມເອົາສ່ວນນຶ່ງຂອງເມືອງນາກາຍ,ຍົມ

ມະລາດ ແລະ ເມືອງຫີນບູນ. ພູມສັນຖານປະກອບດ້ວຍ ບັນດາສາຍພູທີ່ຕ່ຳ ແລະ ປານກາງ, ສາຍພູຕ່ຳໄດ້ສະລັບຊັບຊ້ອນ ກັບບັນດາພູພຽງທີ່ຮາບພຽງດີສົມຄວນ. ເຂດນີ້ແມ່ນເໝາະສົມໃຫ້ແກ່ການປູກ ພືດ, ປູກຕົ້ນໄມ້ອຸດສາຫະກຳໃຫຍ່ໄວ ປະສານ ສົມທົບກັບວຽກງານກະສິກຳ - ປ່າໄມ້ ແລະ ການ ລ້ຽງສັດ.

- ***ເຂດທົ່ງພຽງ*** : ກວມປະມານ 46,3% ຂອງເນື້ອທີ່ທົ່ວແຂວງ ກວມເອົາເມືອງທ່າແຂກ, ໜອງບົກ, ເຊບັ້ງໄຟ, ໄຊບົວທອງ ແລະ ສ່ວນໜຶ່ງຂອງເມືອງຫີນບູນ ເປັນເຂດທີ່ອຸດົມສົມບູນ, ພູມສັນຖານຮາບພຽງ,ມີທົ່ງກວ້າງຢູ່ລຽບຕາມແຄມນ້ຳເຊບັ້ງໄຟ ແລະ ແມ່ນ້ຳອື່ນໆ. ເປັນເຂດເໝາະສົມໃຫ້ແກ່ການຜະລິດກະສິກຳເປັນຕົ້ນແມ່ນການປູກຝັງແລະລ້ຽງສັດ,ອັນທີ່ພົ້ນເດັ່ນແມ່ນການປູກເຂົ້າແລະປູກພືດ ໄລຍະສັ້ນ.

## 5.3 ການດຳລົງຊີວິດຂອງປະຊາຊົນ

ແຂວງຄຳມ່ວນປະກອບມີ 2 ຊົນເຜົ່າຄື : ລາວລຸ່ມ ແລະ ລາວເທິງ ສ່ວນໃຫ່ຍຍຶດຖືອາຊີບທຳການຜະລິດເປັນຕົ້ນ : ປູກຝັງ ແລະ ລ້ຽງສັດ .

## 5.4 ອັດຕາລາຍຮັບ ແລະ ການຂະຫຍາຍຕົວມ ( ຂໍ້ມູນອ້າງອີງປີ 2008 )

- ອັດຕາເພີ້ມຂື້ນຂອງປະຊາຊົນ 2,2 %
- ຕົວເລກເສດຖະກິດ, GDP ຂະຫຍາຍຕົວໃນລະດັບ 8.7 %
- ສະເລ່ຍລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ 584 ໂດຣາ/ຄົນ/ປີ ຫຼື 5.584.918 ກີບ

- **ແຜນທີ່ແຂວງຄຳມ່ວນ**



- ບັນດາສາຂາສາຍນ້ຳທີ່ພາໃຫ້ເກີດນ້ຳຖ້ວມຢູ່ພາຍໃນ 09 ເມືອງ

| ລ/ດ | ຊື່ບັນດາເມືອງ | ຊື່ສາຍແມ່ນ້ຳ |
|---|---|---|
| 01 | ເມືອງທ່າແຂກ | ສາຍນ້ຳຂອງ , ນ້ຳໂດນ |
| 02 | ເມືອງມະຫາໄຊ | ສາຍນ້ຳເຊບັ້ງໄຟ |
| 03 | ເມືອງໜອງບົກ | ສາຍນ້ຳຂອງ , ນ້ຳເຊບັ້ງໄຟ |
| 04 | ເມືອງຫີນບູນ | ສາຍນ້ຳຂອງ , ນ້ຳຫີນບູນ |
| 05 | ເມືອງຍົມມະລາດ | ສາຍນ້ຳຍົມ |
| 06 | ເມືອງບົວລະພາ | ສາຍນ້ຳເຊ ,ນ້ຳພະນັງ |
| 07 | ເມືອງນາກາຍ | ນ້ຳເທີນ |
| 08 | ເມືອງເຊບັ້ງໄຟ | ສາຍນ້ຳເຊບັ້ງໄຟ , ເຊນ້ອຍ |
| 09 | ເມືອງໄຊບົວທອງ | ສາຍນ້ຳເຊນ້ອຍ |

## 6. ສະພາບພື້ນຖານໂຄງລ່າງ

### 6.1 ໂຍທາທິການ ແລະ ຂົນສົ່ງ

ແຂວງຄຳມ່ວນມີເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ຍາວ 143 ກມ, ເສັ້ນທາງເລກທີ 12 ແຕ່ທ່າແຂກເຖິງຊາຍແດນຫວຽດນາມ ແລະ ທາງຫຼວງແຫ່ງຊາດ ເລກທີ 8B ໄປເຖິງທ່າເຮືອວຸ້ງອ້າງ, ມີເສັ້ນທາງຄົມມະນາຄົມແຕ່ແຂວງລົງຫາເມືອງ ທີ່ສາມາດຫຼຽວໄດ້ 2 ລະດູ ແລະ ແຕ່ເມືອງ ລົງຫາບ້ານຈຳນວນໜຶ່ງ ກໍ່ມີຄວາມ ສະດວກສະບາຍສາມາດຫຼຽວໄດ້ 2 ລະດູ ພ້ອມນັ້ນຍັງໄດ້ສ້າງເງື່ອນໄຂອຳນວຍ ຄວາມສະດວກ ສຳລັບການພັດທະນາການຜະລິດ ແລະ ຈໍລະຈອນສິນຄ້າ, ມີທ່າເຮືອຢູ່ແມ່ນ້ຳຂອງ ຊຶ່ງມີສາຍທາງນ້ຳຍາວ 153 ກມ , ມີເສັ້ນທາງຕິດຕໍ່ອອກໄປເຖິງ ທ່າກຳປັ່ນ ຢູ່ບາງກອກ (ປະເທດໄທ). ທີ່ຕັ້ງພູມສາດ ຄືດັ່ງທີ່ກ່າວມາຂ້າງເທິງນັ້ນ ເປັນສາຍເຫດໃຫ້ ແຂວງຄຳມ່ວນມີເງື່ອນໄຂສະດວກຫລາຍຢ່າງ ເພື່ອເສີມຂະຫຍາຍທ່າແຮງ, ປັບປຸງດ້ານອ່ອນ ເພື່ອຊຸກຍູ້ການຜະລິດສິນຄ້າ ແລະ ພົວພັນເສດຖະກິດ ກັບບັນດາແຂວງ ກໍ່ຄືໃນພາກພື້ນອາຊີ ແລະ ໃນໂລກ ໃຫ້ໄວຂຶ້ນເປັນກ້າວໆ

- ຕາຕະລາງສັງລວມທາງດ້ານໂຍທາທິການ ແລະ ຂົນສົ່ງ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຄວາມຍາວ ( ແມັດ ) | ໝາຍເຫດ |
|---|---|---|---|---|
| 1 | ເສັ້ນທາງທັງໝົດ | ເສັ້ນ | 80.319 | |
| 2 | ເສັ້ນທາງປູເປຕົງ | ເສັ້ນ | 9.890 | |
| 3 | ເສັ້ນທາງປູຢາງ | ເສັ້ນ | 47.750 | |
| 4 | ເສັ້ນທາງປູດິນແດງ | ເສັ້ນ | 31.580 | |
| 5 | ຂົວທັງໝົດ | 17 ແຫ່ງ | 535 | |

## 6.2 ດ້ານວັດທະນາທໍາ - ສັງຄົມ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 1 | ໂຮງຮຽນປະຖົມ | ແຫ່ງ | 618 | |
| 2 | ໂຮງຮຽນມັດທະຍົມຕອນປາຍ | ແຫ່ງ | 2 | ມ 4 - ມ 7 |
| 3 | ໂຮງຮຽນມັດທະຍົມສົມບູນ | ແຫ່ງ | 30 | ມ 1 - ມ 6 |
| 4 | ໂຮງຮຽນວິຊາຊີບ | ແຫ່ງ | 7 | ລັດ 1 ແຫ່ງ |
| 5 | ໂຮງຮຽນອານຸບານ | ແຫ່ງ | 61 ແຫ່ງ | ເອກະຊົນ 13 ແຫ່ງ |
| | ໂຮງໝໍແຂວງ | | 1 | |
| 6 | ໂຮງໝໍເມືອງ | ແຫ່ງ | 8 | |
| 7 | ສຸກສາລາ | ແຫ່ງ | 74 | |
| 8 | ຫ້ອງກວດພະຍາດ | ແຫ່ງ | 16 | ເອກະຊົນ |
| 9 | ໂຮງງານນ້ຳດື່ມ | ແຫ່ງ | 34 | |

## 7. ວິເຄາະຄວາມອາດສາມາດ, ຜູ້ຖືກຜົນກະທົບໄດ້ງ່າຍ ແລະ ໄພອັນຕະລາຍ

### 7.1 ສາຍເຫດເກີດໄພນ້ຳຖ້ວມ

ແຂວງຄຳມ່ວນໄພນ້ຳຖ້ວມສ່ວນໃຫ່ຍແມ່ນເກີດຈາກພະຍຸຝົນຕົກ ເຮັດໃຫ້ລະດັບນ້ຳຂອງ , ນ້ຳເຊບັ້ງໄຟ,ນ້ຳຫີນບູນ ,ນ້ຳປະກັນ , ນ້ຳໂດນ ແລະນ້ຳສາຍຕ່າງໆ ຂຶ້ນສູງ ພາໃຫ້ນ້ຳໄຫຼເຂົ້າຖ້ວມພື້ນທີ່ທຳການຜະລິດ ທີ່ຢູ່ອາໃສຂອງປະຊາຊົນ .

- **ລະດັບຄວາມຮຸນແຮງ**

ຍ້ອນສາຍເຫດຄືດັ່ງຂ້າງເທິງນັ້ນ ເຮັດໃຫ້ຜົນຜະລິດທາງດ້ານກະສິກຳເສຍຫາຍປະມານ 70% ຂອງມູນເສຍຫາຍທັງໝົດ, ທາງດ້ານຄົມມະນາຄົມເສຍຫາຍ 25% ແລະ ວັດທະນາທຳ-ສັງຄົມ 5 % ນອກຈາກຜົນເສຍຫາຍດັ່ງກ່າວນຍັງເກີດມີພະຍາດລະບາດຕໍ່(ຄົນ ແລະ ສັດລ້ຽງຕາມມາ , ພ້ອມສ້າງຄວາມບໍ່ສະຫງົບໃນສັງຄົມ ( ເກີດມີໄພອຶດຫິວ ) ປະຊາຊົນຕ້ອງຈາກດິນດອນຕອນຫຍ້າເຂົ້າມາຫາເຮັດວຽກຢູ່ໃນເມືອງ.

- **ຊ່ວງໄລຍະເວລານ້ຳຖ້ວມ**

ໄລຍະເວລາມັກເກີດນ້ຳຖ້ວມຊ່ວງເດືອນສິງຫາ - ເດືອນຕຸລາ ແກ່ຍາວປະມານ 1 ຫາ 2 ເດືອນ

- **ຕາລະຕາງລະດັບນ້ຳອັນຕະລາຍຂອງຫຼາແຫກນ້ຳຢູ່ແຕ່ລະຈຸດ**

| | | |
|---|---|---|
| 1. ນ້ຳຂອງ (ເມືອງທ່າແຂກ) | ລະດັບອັນຕະລາຍ | 13,50 m |
| 2. ນ້ຳເຊ (ເຊບັ້ງໄຟ) | ລະດັບອັນຕະລາຍ | 17.00 m |
| 3. ນ້ຳເຊ ( ມະຫາໄຊ) | ລະດັບອັນຕະລາຍ | 15.00 m |

## 8. ຜົນກະທົບທາງດ້ານການດຳລົງຊີວິດ ແລະ ເສດຖະກິດ - ສັງຄົມ

### ກ . ດ້ານການດຳລົງຊີວິດ

ຄືພວກເຮົາຮູ້ນຳກັນແລ້ວບັນຫາໄພນ້ຳຖ້ວມແມ່ນບັນຫາໃຫ່ຍ ແລະ ເປັນໄພຂົ່ມຂູ່ຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າເຊັ່ນ : ສ້າງຄວາມເສຍຫາຍຕໍ່ພື້ນຖານໂຄ່ງລ່າງ , ເນື້ອທີ່ທຳການຜະລິດ , ເສັ້ນທາງຄົມມະນາຄົມຖືກຕັດຂາດ , ການທຳມາຫາກິນຂອງປະຊາຊົນພົບຄວາຫຍຸ້ງຍາກເກີດມີໄພອຶດຫິວ .

**ຂ. ດ້ານເສດຖະກິດ-ສັງຄົມ**

ບັນຫາໄພນ້ຳຖ້ວມນອກຈາກສ້າງຄວາມເສຍຫາຍຕໍ່ພື້ນຖານໂຄງລ່າງແລ້ວຍັງສ້າງຄວມເສຍຫາຍທາງດ້ານເສດຖະກິດ-ສັງຄົມຂອງແຂວງເປັນຕົ້ນແມ່ນ : ການຢຸດສະງັດຂອງໂຮງຈັກ ໂຮງງານ ເຮັດໃຫ້ອັດຕາການຫວ່າງງານເພີ້ມຂື້ນ,ສູນເສຍຊັບພະຍາກອນ ກໍ່ໃຫ້ເກີດມີການເພີ້ມມູນຄ່າເສຍຫາຍທາງດ້ານທຸລະກິດການບໍລິການສິນຄ້າ " ອັດຕາເງິນເຟີ້ສູງຂື້ນ ພໍ່ພຽງເທົ່ານັ້ນຍັງສົ່ງຜົນຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດ ( ການຈໍລະຈອນສິນຄ້າ , ການພັດທະນາ-ເສດຖະກິດສັງຄົມເກີດມີຄວາມຊັກຊ້າແກ່ຍາວການລົງທຶນໃນການກໍ່ສ້າງພື້ນຖານໂຄງລ່າງເປັນອຳມະພາດ ນອກຈາກນີ້ຍັງສົ່ງຜົນກະທົບທາງດ້ານຈິດໃຈຕໍ່ຄອບຄົວຜູ້ປະສົບໄພເຄາະຮ້າຍ

ຈາກບັນຫາຂ້າງເທິງນັ້ນ ມັນສະແດງໃຫ້ເຫັນວ່າ ບັນຫາໄພນ້ຳຖ້ວມແມ່ນເປັນບັນຫາທີ່ສຳຄັນ ທີ່ກີດກັ້ນການພັດທະນາ-ເສດຖະກິດສັງຄົມໃນຂົງເຂດນັ້ນ ໂດຍສະເພາະໃນລະດັບຊຸມຊົນ ແລະ ມັນຍັງຮຽກຮ້ອງມາຍັງບັນດາທ່ານ ຈົ່ງໄດ້ເອົາໃຈໃສ່ສຸມທຸກກຳລັງສະຕິປັນຍາໃນການຕອບໂຕ້ ແລະ ຟື້ນຟູ ເພື່ອຫຼຸດຜ່ອນການສູນເສຍທາງດ້ານຊີວິດ ແລະ ຊັບສິນຂອງປະຊາຊົນ

- **ຕາຕະລາງເມືອງ ທີ່ມີຄວາມສ່ຽງສູງ , ປານກາງ ທີ່ຖືກຜົນທົບຈາກໄພນ້ຳຖ້ວມ**

| ລ/ດ | ຊື່ບັນດາເມືອງ | ປະເພດຄວາມສ່ຽງ ທີ່ 01 | ປະເພດຄວາມສ່ຽງ ທີ່ 02 |
|---|---|---|---|
| 01 | ເມືອງທ່າແຂກ | | X |
| 02 | ເມືອງມະຫາໄຊ | X | |
| 03 | ເມືອງໜອງບົກ | X | |
| 04 | ເມືອງຫີນບູນ | X | |
| 05 | ເມືອງຍົມມະລາດ | | X |
| 06 | ເມືອງໄຊບົວທອງ | | X |
| 07 | ເມືອງນາກາຍ | | X |
| 08 | ເມືອງເຊບັ້ງໄຟ | X | |
| 09 | ເມືອງບົວລະພາ | | X |

- ***ຜົນເສຍຫາຍໄພນ້ຳຖ້ວມປີ 2005 ທີ່ແຂວງຄຳມ່ວນຖືກຜົນກະທົບໜັກໃນຮອບຫຼາຍ 10 ປີ***
- **ທາງດ້ານກະສິກຳ**

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ |
|---|---|---|---|---|---|---|---|---|---|---|
| 1 | ຈຳນວນທີ່ຖືກກະທົບ | | | | | | | | | |
| | - ຈຳນວນບ້ານ | 90 | 70 | 71 | 126 | 36 | 28 | 27 | 44 | 25 |
| | - ຈຳນວນຄອບຄົວ | 2.762 | 2.590 | 4.841 | 8.806 | 1.919 | 1.894 | 839 | 2.119 | 449 |
| | - ຈຳນວນ ຄົນ | 13.948 | 14.159 | 27.961 | 48.759 | 10.919 | 10.342 | 4.195 | 10.880 | 2.934 |
| 2 | ນາປີ | | | | | | | | | |
| | - ເນື້ອທີ່ປັກດຳ , ຮຕ | 9.530 | 6.520 | 10.008 | 7.920 | 4.560 | 3.500 | 1.443 | 5.580 | 4.300 |
| | - ເນື້ອທີ່ນ້ຳຖ້ວມ, ຮຕ | 2.073 | 3.830 | 7.510 | 7.096 | 1.760 | 2.262 | 114 | 3.200 | 449 |
| | - ເນື້ອທີ່ເສຍຫາຍ,ຮຕ | 829 | 3.568 | 6.574 | 6.336 | 1.397 | 1.190 | 77 | 2.726 | 294 |
| | - ມູນຄ່າ ລ້ານ ກີບ | 3.581,28 | 9.419,52 | 26.033,04 | 28.131,84 | 5.196,84 | 3.784,20 | 295,68 | 11.776,3 | 1.231,28 |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 3 | ພືດສຳຮອງ | | | | | | | | | |
| | - ເນື້ອທີ່ປູກ , ຮຕ | 420 | 354 | 648 | 350 | 202 | 252 | 123 | 503 | 142 |
| | - ເນື້ອທີ່ເສຍຫາຍ,ຮຕ | 126 | 354 | 250 | | 91 | 75 | | 137 | |
| | - ມູນຄ່າ ລ້ານ ກີບ | 504,00 | 1.416,00 | 1.000,00 | | 364,00 | 300,00 | | 548,00 | |
| 4 | ໜອງປາ | | | | | | | | | |
| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ |
| | - ໜອງປາ,ໜອງ | 548 | 3 | 658 | 104 | 39 | | | 167 | 10 |
| | - ມູນຄ່າ ລ້ານ ກີບ | 14,00 | 3,00 | 658,00 | 780,00 | 45,00 | | | 18,19 | 10,00 |
| 5 | ສັດລ້ຽງ | | | | | | | | | |
| 5.1 | - ຄວາຍ , ໂຕ | 17 | 55 | 5 | 20 | 3 | 17 | 2 | 12 | |
| | - ມູນຄ່າ ລ້ານ ກີບ | 42,50 | 135,00 | 12,50 | 50,00 | 6,00 | 68,00 | 5,00 | 24,00 | |
| 5.2 | - ງົວ , ໂຕ | 6 | 100 | 9 | 19 | 7 | 9 | | 91 | 1 |
| | - ມູນຄ່າ ລ້ານ ກີບ | 6,00 | 250,00 | 10,80 | 19,00 | 10,50 | 13,00 | | 136,50 | 1,50 |
| 5.3 | - ໝູ , ໂຕ | | 300 | 30 | 100 | 59 | 6 | | 210 | 8 |
| | - ມູນຄ່າ ລ້ານ ກີບ | | 105,00 | 15,00 | 40,00 | 17,50 | 1,50 | | 157,50 | 3,20 |
| 5.4 | - ສັດປີກ , ໂຕ | 861 | 6.996 | 100 | 2.094 | 636 | 138 | | 4.010 | 30 |
| | - ມູນຄ່າ ລ້ານ ກີບ | 8,61 | 139,92 | 1,50 | 31,41 | 6,36 | 2,76 | | 60,15 | 0,60 |
| 6 | ຊົລະປະທານ | | | | | | | | | |
| 6.1 | - ລະບົບຈັກສູບນ້ຳ | 6 | | | | 2 | | | 14 | |
| | - ມູນຄ່າ ລ້ານ ກີບ | 26,60 | | | | 10,00 | | | 371,00 | |
| 6.2 | - ຫົວງານ | 10 | 5 | 3 | 4 | 1 | | | 14 | |
| | - ມູນຄ່າ ລ້ານ ກີບ | 67,60 | 26,30 | 115,00 | 1.136,00 | 3,00 | | | 45,80 | |
| 6.3 | - ຄອງເໝືອງ | | 4 | 13 | 6 | 2 | | | 3 | |
| | - ມູນຄ່າ ລ້ານ ກີບ | | 1.605,00 | 639,58 | 413,00 | 10,00 | | | 620,00 | |
| 6.4 | - ປະຕູນ້ຳ | | | 2 | | | | | 5 | |
| | - ມູນຄ່າ ລ້ານ ກີບ | | | 639,58 | | | | | 16,00 | |
| 6.5 | - ຝາຍດິນ | | | | 2 | | 2 | 7 | 6 | |
| | - ມູນຄ່າ ລ້ານ ກີບ | | | | 200,00 | | 5,00 | 13,78 | 120,00 | |
| 6.6 | - ຝາຍກວຍຫີນ | | | | | | 5 | | | |
| | - ມູນຄ່າ ລ້ານ ກີບ | | | | | | 50,00 | | | |
| 6.7 | - ຄູປ້ອງກັນນ້ຳຖ້ວມ | | | | 1 | | | | | |
| | - ມູນຄ່າ ລ້ານ ກີບ | | | | 115,83 | | | | | |

- **ທາງດ້ານການສຶກສາ ຜົນເສຍຫາຍທັງໝົດປະມານ 306,10 ລ້ານ ກີບ.**

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ | **ລວມ** |
|---|---|---|---|---|---|---|---|---|---|---|---|
| 1 | ຈຳນວນໂຮງຮຽນ | 2 | 32 | 21 | 18 | | 1 | | 13 | | |
| 2 | ສັງກະສີເສຍຫາຍ | | 450 | 150 | 100 | | 250 | | 485 | | **1.435** |
| | *ມູນຄ່າ , ລ້ານກີບ* | | 17,10 | 5,70 | 3,80 | | 9,50 | | 18,43 | | **54,60** |
| 3 | ໄມ້ແປ້ນເສຍຫາຍ | | | | 90 | | | | 14 | | **104** |
| | *ມູນຄ່າ , ລ້ານກີບ* | | | | 2,25 | | | | 45,80 | | **48,05** |
| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ | **ລວມ** |
| 4 | ໂຕະ,ຕັ່ງ ເສຍຫາຍ | 9 | 244 | 218 | 310 | | | | 3 | | **784** |
| | *ມູນຄ່າ , ລ້ານກີບ* | 0,90 | 12,20 | 10,90 | 15,50 | | | | 0,45 | | **39,95** |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| 5 | ກະດານດຳ | 5 | 58 | 50 | 51 | | | | 5 | | **169** |
| | *ມູນຄ່າ , ລ້ານກີບ* | 0,75 | 8,70 | 7,50 | 7,65 | | | | 16,00 | | **40,60** |
| 6 | ປື້ມແບບຮຽນ | 20 | | | 130 | | | | 6 | | **156** |
| | *ມູນຄ່າ , ລ້ານກີບ* | 0,40 | | | 1,30 | | | | 120,00 | | **121,70** |
| 7 | ພື້ຊີມັງ | 0,30 | | 1 | | | | | | | **1** |
| | *ມູນຄ່າ , ລ້ານກີບ* | 0,30 | | 0,83 | | | | | | | **1,13** |

- **ທາງດ້ານສາທາລະນະສຸກ**

ສຳລັບວຽກທາງດ້ານ ສາທາສາມາດເກັບກຳຜົນເສຍຫາຍໄດ້ທັງໝົດເປັນຕົ້ນວຽກ ສຸກສາລາ, ວຽກຕູ້ຢາ ແລະ ນ້ຳສ້າງບາດານ ເປັນມູນຄ່າທັງໝົດ 940 ລ້ານ ກີບ

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະ ລາດ | ບົວລະ ພາ | ນາກາຍ | ເຊບັ້ງ ໄຟ | ໄຊບົວ ທອງ | **ລວມ** |
|---|---|---|---|---|---|---|---|---|---|---|---|
| 1 | ສຸກສາລາ, ແຫ່ງ | | | 5 | | | | | | | **5** |
| | *ມູນຄ່າ , ລ້ານກີບ* | | | 23,00 | | | | | | | **23,00** |
| 2 | ຕູ້ຢາ , ແຫ່ງ | | 23 | | | | | | | | **23** |
| | *ມູນຄ່າ , ລ້ານກີບ* | | 4,00 | | | | | | | | **4,00** |
| 3 | ນ້ຳສ້າງບາດານ | | | 913 | | | | | | | **913** |
| | *ມູນຄ່າ , ລ້ານກີບ* | | | 913,00 | | | | | | | **913,00** |
| 4 | ການເປັນພະຍາດ | | | | | | | | | | **0** |
| | - ໄຂ້ຫວັດ , ຄນົ | 1.141 | 7 | | 75 | 129 | | | 569 | | **1.921** |
| | - ຖອກທ້ອງ , ຄົນ | 75 | 3 | 10 | 30 | 26 | | | 117 | | **261** |
| | - ຕຸ່ມເປື່ອຍ , ຄົນ | 11 | 135 | 10 | | | | | 1.085 | | **1.241** |
| | - ຕີສັນ , ຄນົ | 2.053 | 100 | | 3 | 8 | | | 2.142 | | **4.306** |
| | - ໄຂ້ເລືອດອອກ,ຄົນ | 215 | | 21 | 1 | | | | 2 | | **239** |
| | - ອັກເສບປອດ | | 2 | | 46 | | | | 78 | | **126** |
| | - ຕາແດງ | 11 | | | 34 | | | | | | **45** |
| | - ໄຂ້ຍຸງ | 11 | 3 | | | 22 | | | 69 | | **105** |
| | - ໄຂ້ທໍລະພິດ | 65 | | | | | | | 2 | | **67** |
| | - ໄຂ້ຍ່ຽວໝູ | 75 | | | | | | | 1 | | **76** |
| | - ໄຂ້ອື່ນໆ | 97 | 6 | | | 19 | | | 118 | | **240** |

- **ທາງດ້ານຄົມມະນາຄົມ**

| ລ/ດ | ລາຍການ | ຂົວ | | ທໍ່ | | ທາງ | |
|---|---|---|---|---|---|---|---|
| | | ແຫ່ງ | ລ້ານກີບ | ມ ຍ | ລ້ານກີບ | ກມ | ລ້ານກີບ |
| 1 | ທ່າແຂກ | 2 | 444,00 | 96 | 68,52 | 5,40 | 317,67 |
| 2 | ມະຫາໄຊ | | 153,20 | | | 9,80 | 174,19 |
| 3 | ໜອງບົກ | 2 | 99,31 | | | 6,19 | 485,00 |
| 4 | ຫີນບູນ | | | | | 15,46 | 695,66 |
| 5 | ຍົມມະລາດ | 2 | 300,71 | 41 | 100,00 | 13,35 | 715,11 |
| 6 | ບົວລະພາ | | | | | | 2.348,85 |
| 7 | ນາກາຍ | | | | | | 50,39 |

| | | | | | | | |
|---|---|---|---|---|---|---|---|
| 8 | ເຊບັ້ງໄຟ | | | | | 49,79 | 760,94 |
| 9 | ໃຊບົວທອງ | | | | | | 499,51 |
| | ລວມ | 6 | 997,22 | 137 | 168,52 | 99,99 | 6.047,32 |

**9. ການຕອບໂຕ້ໄລຍະຜ່ານມາ**

ໄດ້ແຕ່ງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ , ຂັ້ນເມືອງ ແລະ ໄດ້ມີການເປີດກອງປະຊຸມປີລະ 3 ຄັ້ງ ຫຼື ທຸກໆເທດການທີ່ໄດ້ຮັບການເຕືອນໄພລ່ວງໜ້າຈາກກົມອຸຕຸເພື່ອປຶກສາຫາລື ສູມ ທຸກສະຕິປັນຍາ ໃນການທ່າງທາກະກຽມຕອບໂຕ້ໄພນ້ຳຖ້ວມ ໂດຍຖືເອົາການຊ່ວຍເຫຼືອ , ການກູ້ໄພເປັນ ບັນຫາສຳຄັນ ພອ້ມອອກແຈ້ງການເຕືອນໄພລ່ວງໜ້າທາເມືອງ ເພື່ອທ່າງທາກະກຽມ ໄປຽງຄູ່ກັນນັ້ນກໍ່ໄດ້ເນັ້ນໜັກໃສ່ການຊ່ວຍເຫຼືອບັນເທົາທຸກ , ການຊ່ວຍເຫຼືອຟື້ນຟູຫຼັງໄພນ້ຳຖ້ວມ ເປັນຕົ້ນແມ່ນ : ການສະໜອງແນວພັນພືດ , ເຂົ້າກິນ , ຢາປົວພະຍາດ ,ຢາປາບສັດຕູພືດ , ການແຈກຢາຍເຄື່ອງບໍລິໂພກ,ສ້ອມແປງຊົນລະປະທານ ແລະ ອື່ນໆ ເຊິ່ງເຫັນໄດ້ຈາກປີ 2005 ພັກ ແລະ ລັດ ຖະບານໄດ້ສູມທຶນຮອນບຸລະນະສ້ອມແປງພື້ນຖານໂຄງລ່າງເປັນຈຳນວນຫຼາຍຮ້ອຍລ້ານ ເພື່ອຊ່ວຍເຫຼືອ ປະຊາຊົນຜູ້ປະສົບໄພສາມາດຫຼຸດພົ້ນອອກຈາກຄວາມເດືອດຮ້ອນ ແລະ ຄວາມອຶດຫິວ ພ້ອມທັງຮັບປະກັນເຮັດໃຫ້ປະຊາຊົນມີທີ່ເພິ່ງພາອາໃສ ແລະ ສາມາດຈັດຕັ້ງການຟື້ນຟູຊີວິດດ້ວຍຕົນເອງ

**10. ຄວາມອາດສາມາດ ແລະ ແຫຼ່ງວັດຖຸ**

**10.1 ແຜນຄວາມຕ້ອງການວັດຖຸອຸປະກອນ**

- **ທາງດ້ານພາຫະນະຂົນສົ່ງ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | | ໝາຍເຫດ |
|---|---|---|---|---|---|
| | | | ມີແລ້ວ | ຕ້ອງການ | |
| 1 | ເຮືອທ້ອງແບນ | ລຳ | 00 | 50 | |
| 2 | ເຮືອໄວ | ລຳ | 00 | 02 | |
| 3 | ລົດບັນທຸກ | ຄັນ | 00 | 02 | |

- **ທາງດ້ານສິ່ງອຳນວຍຄວາມສະດວກ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | | ໝາຍເຫດ |
|---|---|---|---|---|---|
| | | | ມີແລ້ວ | ຕ້ອງການ | |
| 1 | ເຕັ້ນ | ຊຸດ | 00 | 100 | |
| 2 | ເຄື່ອງຄົວເຮືອນ | ຊຸດ | 00 | 50 | |
| 3 | ໂທລະສັບຕັ່ງໂຕະ | ໜ່ວຍ | 00 | 02 | |
| 4 | ວິທະຍຸຕິດຕໍ່ໄລຍະໄກ | ໜ່ວຍ | 00 | 02 | |
| 5 | ຈັກປັ່ນໄຟ | ໜ່ວຍ | 00 | 09 | |
| 6 | ໂທລະໂຄ່ງ | ໜ່ວຍ | 00 | 09 | |

- **ທາງດ້ານອຸປະກອນຄວບຄຸ້ມໄພນ້ຳຖ້ວມ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | | ໝາຍເຫດ |
|---|---|---|---|---|---|
| | | | ມີແລ້ວ | ຕ້ອງການ | |
| 1 | ຈັກສູບນ້ຳ | ໜ່ວຍ | 00 | 10 | |
| 2 | ເຄື່ອງຊູຊີບ | ຊຸດ | 00 | 900 | |
| 3 | ຖົງຂີ້ຊາຍ | ເປົາ | 00 | 500.000 | |

- **ສິ່ງອຳນວຍຄວາມສະດວກທາງດ້ານການແພດ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ ຕ້ອງການ | ໝາຍເຫດ |
|---|---|---|---|---|
| 1 | ສຸກສາລາ | ແຫ່ງ | 20 | |
| 2 | ຊ່ຽວຊານ | ຄົນ | 10 | |
| 3 | ລົດໂຮງໝໍ | ຄັນ | 05 | |
| 4 | ເຄື່ອງທາງດ້ານການແພດຕ່າງໆ | ຊຸດ | 100 | |

- **ທາງດ້ານຊັບພະຍາກອນ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | | ໝາຍເຫດ |
|---|---|---|---|---|---|
| | | | ມີແລ້ວ | ຕ້ອງການ | |
| 1 | ທີມງານຄົ້ນຫາ ແລະ ກູ້ໄພ | ທີມ | 00 | 09 | |
| 2 | ທີມຕໍ່ສູ້ກັບໄພນ້ຳຖ້ວມ | ທີມ | 00 | 09 | |
| 3 | ອາສາສະມັກ | ຄົນ | 60 | 100 | |

## 11. ກົງຈັກການຈັດຕັ້ງສຳລັບວຽກງານຄຸ້ມຄອງໄພພິບັດຂັ້ນແຂວງຄຳມ່ວນ

### 11.1 ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ (PDMC)

1. ທ່ານ ສົມໃຈ ເພັດສີນວນ ຮອງເຈົ້າແຂວງ ໆ ຄຳມ່ວນ ເປັນປະທານ.
2. ທ່ານ ບຸນສວນ ແສງດາວົງ ປະທານແນວລາວສ້າງຊາດແຂວງ ເປັນຮອງ
3. ທ່ານ ແສງທອງ ພະຄຸນທອງ ຫົວໜ້າພະແນກ ຮສສ ແຂວງ ເປັນຮອງ
3. ທ່ານ ຄຳມະນີ ໜັ້ນຄຳສຸກ ຮອງຫົວຫນ້າຫ້ອງວ່າການປົກຄອງແຂວງ ເປັນກຳມະການ
5. ທ່ານ ຄຳເຟືອງ ເທບພະກັນ ຮອງຫົວໜ້າພະແນກ ກະສິກຳ - ປ່າໄມ້ ແຂວງ ເປັນກຳມະການ
14. ທ່ານ ບຸນໂຮມ ມຸກດາສັກ ຮອງຫົວໜ້າພະແນກອຸດສະຫະກຳ ແລະການຄ້າແຂວງ ເປັນກຳມະການ
4. ທ່ານ ຈັນທະວົງ ດວງມະນີສາ ຮອງຫົວໜ້າພະແນກຖະແຫຼງຂ່າວວັດທະນາທຳແຂວງ ເປັນກຳມະການ
7. ທ່ານ ບຸດດາ ຈັນທະລາ ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເປັນກຳມະການ
10. ທ່ານ ສີຫາວົງ ອິນທິລາດ ຮອງຫົວໜ້າພະແນກ ແຜນການ - ການລົງທຶນແຂວງ ເປັນກຳມະການ
12. ທ່ານ ຄຳມາ ແກ້ວສີກັນຍາ ຮອງຫົວໜ້າພະແນກການເງິນແຂວງ ເປັນກຳມະການ
15. ທ່ານ ບຸດດີ ບຸນທະວົງ ຮອງຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່ ເປັນກຳມະການ
6. ທ່ານ ຄຳຜີງ ວົງສຸລາດ ຮອງຫົວໜ້າພະແນກ ສຶກສາ ແຂວງ ເປັນກຳມະການ
7. ທ່ານ ດຣ ເກດສະໜາ ລັດຖະຈັກ ຮອງຫົວໜ້າພະແນກ ສາທາລະນະສຸກແຂວງ ເປັນກຳມະການ

7. ທ່ານ ອິນທະຫວາ ມູນດາລາ ຮອງຫົວໜ້າຄະນະສະມາຊິກສະພາເຂດ 12 ເປັນກຳມະການ
8. ທ່ານ ແກ້ວດາລີງ ໄຊຍະແສງ ຮອງຫົວໜ້າກອງບັນຊາການ ປ ກ ສ ແຂວງ ເປັນກຳມະການ
18. ທ່ານ ສິມແຄນ ອັບປະສອນ ຫົວໜ້າຫ້ອງການພາລາທິການທະຫານແຂວງ ເປັນກຳມະການ
13. ທ່ານ ຄຳຮຸ່ງ ແກ້ວບຸນມີ ຮອງ ເລຂາຊາວໜຸ່ມແຂວງ ເປັນກຳມະການ
17. ທ່ານ ດາລາວົງ ວົງສະຫວັນທອງ ຫົວໜ້າຫ້ອງການ ກາແດງປະຈຳແຂວງ ເປັນກຳມະການ
20. ທ່ານ ຄຳໄພ ເພັງແພງເມືອງ ຫົວໜ້າຫ້ອງການ ຊນສ ແຂວງ ເປັນກຳມະການ

**11.2 ຄະນະກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ**

1. ທ່ານ ບຸນສຽງ ຊາພັກດີ ຮອງຫົວໜ້າພະແນກ ຮ ສ ສ ແຂວງ ເປັນຫົວໜ້າ
2. ທ່ານ ນາງ ສາທິດ ຈັນສີ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ເປັນຮອງ
3. ທ່ານ ສາຍສະໝອນ ສິມມຸກຄຳຈັນ ຮອງຫົວໜ້າຫ້ອງການກາແດງແຂວງ ເປັນກຳມະການ
4. ທ່ານ ສິມຫັວງ ສຸວັນທອງ ຮອງຫົວໜ້າຫ້ອງການຊາວໜຸ່ມແຂວງ ເປັນກຳມະການ
5. ທ່ານ ບຸນຊູ ເກດທະວົງ ວິຊາການພະແນກໂຍທາທິການ-ຂົນສົ່ງ ເປັນກຳມະການ
6. ທ່ານ ບຸນມີ ສີບຸນເຮືອງ ວິຊາການພະແນກກະສິກຳ - ປ່າໄມ້ ເປັນກຳມະການ
7. ທ່ານ ຄຳພູວົງ ທອມມະນີ ວິຊາການຫ້ອງວ່າການປົກຄອງແຂວງ ເປັນກຳມະການ
8. ທ່ານ ລັດທະນິງໄຊ ວົງແກ້ວ ວິຊາການພະແນກ ຮສສ ແຂວງ ເປັນກຳມະການ
9. ທ່ານ ດຣ ໂກໃສ ທອມໝູຮັກ ວິຊາການພະແນກສາທາແຂວງ ເປັນກຳມະການ
10. ທ່ານ ນາງ ອຸໄລວັນ ແສງສຸວັນນຸຮັກ ວິຊາການຈັດຕັ້ງພະແນກສຶກສາແຂວງ ເປັນກຳມະການ
11. ທ່ານ ເດດສັກດາ ຊິມພູສີ ວິຊາການຫ້ອງການ ຊນສ ເປັນກຳມະການ
12. ທ່ານ ນາງ ຈອມຈັນ ເພັດພູທອນ ການເງິນພະແນກ ຮ ສ ສ ແຂວງ ເປັນກຳມະການ

**12. ພາລະບາດ ແລະ ໜ້າທີ່ຮັບຜິດຊອບຂອງ PDMC (ກ່ອນ ລະຫວ່າງ ແລະ ຫຼັງນ້ຳຖ້ວມ)**

| ກ່ອນໄພພິບັດ | ໄລຍະເກີດ | ຫຼັງເກີດໄພພິບັດ |
|---|---|---|
| - ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ໄດ້ເປີດກອງປະຊຸມປຶກສາຫາລືເພື່ອວາງແຜນກ່ອນເກີດໄພພິບັດ<br>- ຂື້ນແຜນຫ້າງຫາກະກຽມແນວພັນເຂົ້າ ອາຫານແຫ້ງເພື່ອຊ່ວຍເຫຼືອສຸກເສີນ<br>- ມອບໝາຍຄວມຮັບຜິດຊອບໃຫ້ແຕ່ລະພາກສ່ວນ, ຂະແໜງການຕ່າງໆທີ່ກ່ຽວຂ້ອງ ເພື່ອຕິດຕາມສະພາບແຕ່ລະໄລຍະ | - ຄະນະກຳມະການໄດ້ແຕ່ງຕັ້ງພະນັກງານວິຊາການລົງເກັບກຳຂໍ້ມູນເບື້ອງຕົ້ນເພື່ອລາຍງານການນຳ<br>- ລົງຕິດຕາມ,ກວດກາປະເມີນຜົນຕົວຈິງຢູ່ທ້ອງຖິ່ນທີ່ເກີດໄພພິບັດ<br>- ປຸກລະດົມຂົນຂວາຍອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ເອກະຊົນເພື່ອຊ່ວຍເຫຼືອ | - ເປີດກອງປະຊຸມຄົບຄະນະເພື່ອປະເມີນຜົນເສຍຫາຍທາງດ້ານຕ່າງໆຫຼັງນ້ຳລົງ<br>- ສັງລວມຂໍ້ມູນ, ຂື້ນແຜນນຳສະເໜີຕໍ່ຂັ້ນເທິງ ເພື່ອຂໍເຄື່ອງຊ່ວຍເຫຼືອແນວພັນພືດ, ເຂົ້າ, ອາຫານ ແລະ ເຄື່ອງໃຊ້ສ່ອຍຕ່າງໆ ເພື່ອຟື້ນຟູ<br>- ລົງຢ້ຽມບ້ານທີ່ຖືກຜົນກະທົບເພື່ອໃຫ້ກຳລັງໃຈເຂົາເຈົ້າດີຂື້ນ<br>- ລະດົມທຶນຮອນຈາກພາກສ່ວນຕ່າງໆ ເພື່ອຈັດຊື້ວັດຖຸ, ອຸປະກອນຕ່າງໆ ເພື່ອສ້ອມແປງສິ່ງທີ່ເປ້ເພໃຫ້ກັບຄືນ |

13. **ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງກອງເລຂາ (ກ່ອນ ລະຫວ່າງ ຫຼັງນ້ຳຖ້ວມ)**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ<br>- ສັງລວມຂໍ້ມູນ<br>- ກະກຽມເອກະສານ ເພື່ອເປີດກອງປະຊຸມ<br>- ປະສານງານກັບພາກສ່ວນຕ່າງໆທັງພາກລັດ ແລະ ເອກະຊົນແທນຄະນະ | - ລົງຕິດຕາມເກັບກຳຂໍ້ມູນຜົນເສຍຫາຍເບື້ອງຕົ້ນໄລຍະເກີດໄພພິບັດ<br>- ສັງລວມຂໍ້ມູນຜົນເສຍຫາຍທາງດ້ານຕ່າງໆໃຫ້ຄະນະຮັບຊາບເປັນໄລຍະ | - ສົມທົບກັບຄະນະຂັ້ນເມືອງລົງເກັບກຳຂໍ້ມູນຜົນເສຍຫາຍຕົວຈິງ<br>- ກະກຽມຂໍ້ມູນເພື່ອເປີດກອງປະຊຸມຄົບຄະນະ ໃນການວາງແຜນການຟື້ນຟູຫຼັງໄພນ້ຳຖ້ວມ |

14. **ທີມງານຄຸ້ມຄອງໄພພິບັດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະຂະແໜງ**

- **ພະແນກກະສິກຳແລະປ່າໄມ້ແຂວງຄຳມ່ວນ**

| | | |
|---|---|---|
| - ມີຄະນະກຳມະການຄຸ້ມຄອງ ໄພພິບັດເຊິ່ງມີຫຼາຍພາກສ່ວນກ່ຽວຂ້ອງ<br>- ມີກອງປະຊຸມດັ່ງກ່າວທັງຂັ້ນແຂວງ ແລະເມືອງ<br>- ແບ່ງພາລະບົດບາດຂອງແຕ່ລະພາກສ່ວນແຕ່ລະຂັ້ນ<br>- ກະກຽມແນວພັນເຂົ້າພືດ,ຝຸ່ນ<br>- ກຽມແນວພັນສັດ,ຢາປົວພະຍາດ<br>- ເກັບກຳຂໍ້ມູນອຸຕຸ ເພື່ອລາຍງານ | - ລົງທ້ອງຖິ່ນ,ເມືອງ,ບ້ານຕົວຈິງເພື່ອແນະນຳການປູກຝັງ.<br>- ລົງຕິດຕາມທ້ອງຖິ່ນ, ເມືອງ, ບ້ານທີ່ຖືກໄພພິບັດ.<br>- ແຈ້ງຂ່າວພະຍາກອນເຕືອນໄພແຕ່ຫົວທີ | - ສືບຕໍ່ລ້ຽງ,ປູກ(ສັດ,ພືດ,ເຂົ້າທີ່ເໝາະສົມຫຼັງນ້ຳຖ້ວມ.<br>- ຕີລາຄາ,ປະເມີນຜົນການຈັດ ຕັ້ງ ປະຕິບັດ |

- **ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ເປັນຜູ້ປະສານງານກັບພາກສ່ວນຂະແໜງການຕ່າງໆເພື່ອສ້າງໂຄງຮ່າງການຈັດຕັ້ງ PDMC<br>-ຂຶ້ນແຜນຊອກຫາບຸກຄະລະກອນ<br>- ສ້າງແຜນໂຄງການປະຈຳປີເພື່ອຂໍງົບປະມານຮັບໄຊ້ໃນການຕອບໂຕ້ໄພພິບັດ.<br>- ເກັບກຳສັງລວມຂໍ້ມູນໄພພິບັດສົ່ງໃຫ້ ຄະນະກຳມະການ ຄພຂ.<br>-ພົວພັນກັບພາກສ່ວນການຈັດຕັ້ງເພື່ອປຸກລະດົມຊອກແຫຼ່ງລາຍຮັບ | - ແຈ້ງການໃຫ້ຄະນະຈັດຕັ້ງ<br>- ລົງເກັບກຳຂໍ້ມູນໄພພິບັດ<br>- ປຸກລະດົມຂົນຂວາຍອົງການຕ່າງໆ ເພື່ອຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ<br>- ສົ່ງເຄາະອຸປະກອນຮັບໄຊ້ປະຈຳວັນເພື່ອຊ່ວຍເຫຼືອຜູ້ປະສົບໄພສຸກເສີນ.<br>- ລາຍງານສະພາບໄພພິບັດ ແຕ່ລະໄລຍະໃຫ້ຄະນະປະທານ. | - ປະເມີນຜົນເສຍຫາຍລາຍງານໃຫ້ຄະນະນຳ<br>-ຂຶ້ນແຜນນຳສະເໜີເຄື່ອງຊ່ວຍເຫຼືອບັນເທົາທຸກ.<br>-ແຈກຢາຍເຄື່ອງບັນເທົາທຸກ ໃຫ້ປະຊາຊົນຜູ້ປະສົບເຄາະຮ້າຍ. |

- **ພະແນກການເງິນແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກຽມງົບປະມານເພື່ອຮັບມືກັບເຫດການທີ່ຄາດຈະເກີດຂື້ນ. | - ອຳນວຍຄວາມສະດວກໃຫ້ແຕ່ລະຂະແໜງການໃຫ້ທັນກັບສະພາບການ | - ເໜີນຳຂັ້ນນຳເມື່ອມີໄພພິບັດ<br>- ປຸກລະດົມທັງພາກລັດ ແລະ ເອກະຊົນເພື່ອລະດົມທຶນຟື້ນຟູຄືນໃໝ່ |

- **ກາແດງແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ປະຊຸມວາງແຜນຝຶກອົບຮົມ ອສບ ຊົນຂວຍຊອກທຶນ ອາຫານອຸປະກອນ | - ເຮັດການຕອບໂຕ້ທັນທີດ້ານ | - ໃຫ້ຄວາມຮູ້ດ້ານສຸຂະສຶກສາ |

- **ພະແນກຖະແຫຼງຂ່າວ ແລະ ວັດທະນາທຳ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ຫາຂໍ້ມູນຈາກຂະແໜງການກ່ຽວຂ້ອງເພື່ອແຈ້ງຂ່າວເຕືອນໄພໃຫ້ປະຊາຊົນສາມາດກະກຽມຕອບໂຕເພື່ອຮັກສາຊີວິດ,ສັບສິນຂອງປະຊາຊົນ | - ລົງຕິດຕາມເຖິງເຂດເປົ້າໝາຍເພື່ອລະດົມ ແລະ ແຈ້ງຂ່າວແກ່ຊຸມຊົນ<br>-ລາຍງານສະພາບໄພພິບັດໃຫ້ຄະນະນຳ ເພື່ອຊອກຫາເຄື່ອງຊ່ວຍເຫຼືອ | - ໂຄສະນາຟື້ນຟູບູລະນະພາຍຫຼັງໄພພິບັດ |

- **ສຶກສາແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກະກຽມແບ່ງວຽກໃຫ້ແຕ່ລະພາກສ່ວນເພື່ອກຽມຮັບມືກັບໄພພິບັດແລະພ້ອມທັງຈັດຕັ້ງປະຕິບັດ | - ລະດົມກຳລັງທຸກພາກສ່ວນເພື່ອຊ່ວຍປະຊາຊົນຜູ້ຖືກໄພພິບັດ | - ປະເມີນຜົນເສຍຫາຍທາງດ້ານວັດຖຸ ແລະ ສັບສິນ.<br>- ປະເມີນມູນຄ່າເສຍຫາຍ |

- **ພະແນກອຸດສະຫະກຳ ແລະ ການຄ້າ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກະກຽມ,ຂື້ນແຜນຮັບມືຕໍ່ໄພພິ ບັດຈະເກີດຂື້ນ.<br>- ກວດກາມາດຖານມົນລະພິດຕ່າງໆຕາມໂຮງຈັກໂຮງງານ<br>- ເກັບກຳສະພາບສິນຄ້າເພື່ອປ້ອງກັນບໍ່ໃຫ້ກະທົບຕໍ່ປະຊາຊົນ | -ຈັດຕັ້ງຄະນະຄຸ້ມຄອງສິນຄ້າເພື່ອປ້ອງກັນຜູ້ສວຍໂອກາດ<br>- ຮັບປະກັນສະໜອງອາຫານເຄື່ອງໄຊ້ສອຍໃຫ້ພຽງພໍ<br>- ຄຸ້ມຄອງການຮື່ວໄຫຼບັນດາສານເຄມີຕ່າງໆ ໑ ລະອອກມາດຕະການຄຸ້ມຄອງ | - ອຳນວຍຄວາມສະດວກໃນການນຳເຂົ້າ,ແນວພັນພືດເພື່ອຟື້ນຟູການພະລິດໃຫ້ຄືນສູ່ສະພາບປົກກະຕິ.<br>- ກວດກາຜົນເສຍຫາຍຂອງໂຮງຈັກໂຮງງານຕ່າງໆພ້ອມທັງຊອກ ວິທີສ້ອມແຊມຄືນ. |

- **ພະແນກແຜນການ ແລະ ການລົງທຶນ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ສ້າງແຜນພັດທະນາເສດຖະກິດຂອງແຂວງ,ໂດຍຕິດພັນກັບແຜນ ປ້ອງກັນໄພພິບັດ.<br>- ແຜນແມ່ບົດ 20 ປີ ເຖິງ 2020<br>- ແຜນ 5 ປີ, 1 ປີ<br>- ລົງທຶນໃສ່ການກໍ່ສ້າງຈຳນວນ ໜຶ່ງເພື່ອຕອບໂຕ້ການເຈື່ອນຂອງດິນ,ຄອງລະບາຍນ້ຳອື່ນໆ. | - ສ້າງແຜນເລັ່ງລັດສະເໜີ ລັດຖະບານເພື່ອຂໍທຶນຊ່ວຍເຫຼືອ ຈາກພາກລັດເອກກະຊົນ ແລະສາກົນ<br>- ເຂົ້າຮ່ວມກັບຂະແໜງການ ຕ່າງໆໃນການລົງຊ່ວຍເຫຼືອປະຊາຊົນ ແລະລະດົມທຶນ | - ສົມທົບກັບຂະແໜງກ່ຽວຂ້ອງລົງສຳຫຼວດກວດກາຫາການເສຍ ຫາຍເພື່ອຂື້ນແຜນສ້ອມແຊມ |

- **ພະແນກ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ແຈ້ງຂ່າວເຕືອນໄພລ່ວງໜ້າໂດຍຜ່ານລະບົບໄປສະນີແລະໂທລະຄົມຕາມເຂດທີ່ເໝາະສົມ | - ຮີບຮ້ອນຊ່ວຍປະຊາຊົນໃຫ້ປອດໄພຈາກສະຖານທີ່ສ່ຽງ | - ກຽມພ້ອມພາຫະນະທາງເຮືອ,ແລະລົດເພື່ອຍົກຍ້າຍປະຊາຊົນໄປຢູ່ບ່ອນປອດໄພ |

- **ທະຫານແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກະກຽມກຳລັງທະຫານເພື່ອຕອບໂຕ້ຕໍ່ໄພພິບັດຈະເກີດຂື້ນແຜນ :<br>- ກຳລັງພົນ, ພາຫະນະຂົນສົ່ງ | - ນຳກຳລັງລົງຊ່ວຍກູ້ໄພໃນເຂດທີ່ເກີດໄພພິບັດ<br>- ຍົກຍ້າຍກຸ່ມສ່ຽງ ແລະ ອຸປະກອນໄປບ່ອນປອດໄພ | - ນຳກຳລັງຊ່ວຍຟື້ນຟູເຂດທີ່ເປ່ເພ |

- **ສະຫະພັນແມ່ຍິງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ປະຊຸມຄະນະກຳມະການຕ້ານພພິບັດ ແລະວາງແຜນຮັບມື<br>- ໂຄສະນາຕໍ່ສະພາບໄພພິບັດໃຫ້ເອື້ອຍນ້ອງແມ່ຍິງໄດ້ເອົາໃຈໃສ່ ຕໍ່ເຫດການດັ່ງກ່າວ. | - ລົງໂຄສະນາຊ່ວຍເຫຼືອຕາມຄວາມສາມາດ ແລະ ໃຫ້ການແນະນຳແກ່ແມ່ຍິງ ໃນການ ຫຼີກ໌ລ້ຽງໄພພິບັດ | - ລົງຢ້ຽມຢາມໃຫ້ກຳລັງໃຈແລະຖາມເຖິງສຸຂະພາບແມ່ຍິງໃນເຂດສ່ຽງໄພ |

- **ກຳລັງປ້ອງກັນຄວາມສະງົບ (ປກສ)**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ແຈ້ງການຫາກົມກອງເພື່ອເຕືອນພໍ່ແມ່ປະຊາຊົນໃຫ້ກະກຽມຕ້ານໄພພິບັດ.<br>- ຊອກແຫຼ່ງ,ສະຖານທີ່ຫຼົບຫຼີກແກ່ປະຊາຊົນເພື່ອຫຼີກລ້ຽງໄພພິບັດ | -ຈັດກຳລັງກວດກາຜົນກະທົບເພື່ອຊ່ວຍໃຫ້ທັນເວລາ<br>- ກະກຽມກຳລັງແລະພາຫະນະ<br>-ຍົກຍ້າຍປະຊາຊົນ,ໄປຢູ່ບ່ອນປອດໄພ. | - ສະຫຼຸບແລະລາຍງານຜົນກະທົບແກ່ຂັ້ນນຳ.<br>- ລະດົມກຳລັງຊ່ວຍປະຊາຊົນ:ການປຸກສ້າງ,..<br>- ຊ່ວຍເຫຼືອຕາມຄວາມສາມາດ |

15. **ຫ້ອງຄຸ້ມຄອງໄພນ້ຳຖ້ວມລະດັບແຂວງ**

ຫ້ອງການຄຸ້ມຄອງໄພນ້ຳຖ້ວມແມ່ນເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເປັນໃຈກາງໃນການປະສານກ່ຽວກັບວຽກງານໄພນ້ຳຖ້ວມກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອທ່າງຫາກະກຽມຕອບໂຕ້ໄພນ້ຳຖ້ວມທີ່ອາດຈະເກີດ ພ້ອມກັນນັ້ນກໍ່ຕ້ອງໄດ້ສ້າງແຜນຄົນ - ຂື້ນແຜນການງົບປະມານ .

- **ລາຍຊື່ບັນດາພະນັກງານທີ່ຈະບັນຈຸເຂົ້າໃນຫ້ອງການຄຸ້ມຄອງໄພນ້ຳຖ້ວມລະດັບແຂວງ**

1. ທ່ານ ບຸນສຽງ ຊາພັກດີ ຮອງຫົວໜ້າພະແນກ ຮ ສ ສ ແຂວງ ເປັນຫົວໜ້າ
2. ທ່ານ ນາງ ສາທິດ ຈັນສີ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ເປັນຮອງ
3. ທ່ານ ສາຍສະໜອນ ສິມມຸກຄຳຈັນ ຮອງຫົວໜ້າຫ້ອງການກາແດງແຂວງ ເປັນກຳມະການ
4. ທ່ານ ສົມຫັວງ ສຸວັນທອງ ຮອງຫົວໜ້າຫ້ອງການຊາວໜຸ່ມແຂວງ ເປັນກຳມະການ
5. ທ່ານ ບຸນຊູ ເກດທະວົງ ວິຊາການພະແນກໂຍທາທິການ-ຂົນສົ່ງ ເປັນກຳມະການ
6. ທ່ານ ບຸນມີ ສີບຸນເຮືອງ ວິຊາການພະແນກກະສິກຳ - ປ່າໄມ້ ເປັນກຳມະການ
7. ທ່ານ ຄຳພູວົງ ທອມມະນີ ວິຊາການຫ້ອງວ່າການປົກຄອງແຂວງ ເປັນກຳມະການ
8. ທ່ານ ລັດທະນົງໄຊ ວົງແກ້ວ ວິຊາການພະແນກ ຮສສ ແຂວງ ເປັນກຳມະການ
9. ທ່ານ ດຣ ໂກໃສ ທອມໝູຮັກ ວິຊາການພະແນກສາທາແຂວງ ເປັນກຳມະການ
10. ທ່ານ ນາງ ອຸໄລວັນ ແສງສຸວັນນຸຮັກ ວິຊາການຈັດຕັ້ງພະແນກສຶກສາແຂວງ ເປັນກຳມະການ
11. ທ່ານ ເດດສັກດາ ຊົມພູສີ ວິຊາການຫ້ອງການ ຊນສ ເປັນກຳມະການ
12. ທ່ານ ນາງ ຈອມຈັນ ເພັດພູທອນ ການເງິນພະແນກ ຮ ສ ສ ແຂວງ ເປັນກຳມະການ

- **ແຜນຄວາມຕ້ອງການທາງດ້ານອຸປະກອນ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 1 | ຫ້ອງການ | ຫຼັງ | 01 | |
| 2 | ລົດກະບະ | ຄັນ | 02 | |
| 3 | ລົດຈັກພາກສະໜາມ | ຄັນ | 05 | |
| 4 | ຄອມພິວເຕີຄົບຊຸດ | ໜ່ວຍ | 03 | |
| 5 | ຄອມພິວເຕີ / Noet Book | ໜ່ວຍ | 02 | |
| 6 | ເຄື່ອງກ໋ອບເອກະສານ | ໜ່ວຍ | 01 | |
| 7 | ໂທລະສັບທາງໄກ | ໜ່ວຍ | 02 | |
| 8 | ໂທລະສັບຕັ້ງໂຕະ | ໜ່ວຍ | 02 | |
| 9 | ໂທລະໂຄ່ງ (ພາກສະໜາມ) | ໜ່ວຍ | 02 | |
| 10 | ກະດານຂາວ | ແຜ່ນ | 01 | |
| 11 | ເຄື່ອງສາຍ LCD | ໜ່ວຍ | 01 | |
| 12 | ກ້ອງຖ່າຍ VDO | ໜ່ວຍ | 02 | |
| 13 | ກ໋ອງຖ່າຍຮູບ | ໜ່ວຍ | 02 | |

16 . **ມາດຕະການການກຽມພ້ອມຕ້ານໄພນ້ຳຖ້ວມ.**

16.1. **ກິດຈະກຳການກຽມພ້ອມ.**

1. ອອກແຈ້ງການຂອງປະທານຄະນະກຳມະການຂັ້ນແຂວງ ຫາ ເມືອງເພື່ອເຕືອນໄພລ່ວງໜ້າພາຍຫຼັງໄດ້ຮັບການແຈ້ງຈາກກົມອຸຕຸ

2. ຮຽກປະຊຸມຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເພື່ອປຶກສາຫາລື ແບ່ງຄວາມຮັບຜິດຊອບໃຫ້ຂະແໜງງານຕ່າງໆ

3. ຕິດຕາມສະພາບອາກາດເປັນປະຈຳ ເພື່ອລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບແຕ່ລະໄລຍະ

4. ເຝົ້າລະວັງ ຕິດຕາມລະດັບນ້ຳຢູ່ຈຸດຫຼາແທກນ້ຳຕ່າງໆ

3. ວາງແຜນການຍົກຍ້າຍຄົນ ແລະ ສັດລ້ຽງໄປບ່ອນທີ່ບ່ອນໄພ ເພື່ອຮັບມືກໍ່ລະນີມີເຫດການສຸກເສີນ

4. ຫາງຫາກະກຽມພາຫະນະ , ເຮືອ, ລົດບັນທຸ, ເຕັນ ແລະ ອຸປະກອນຕ່າງໆ ທີ່ຈຳເປັນ

5. ວາງແຜນ , ຂື້ນແຜນເຄື່ອງບໍລິໂພກ - ອຸປະໂພກ ເພື່ອແຮ່ຊ່ວຍເຫຼືອຜູ້ປະສົບໄພເຄາະຮ້າຍ

## 17. ມາດຕະການການຕອບໂຕ້.

### 17.1 ກິດຈະກຳການຕອບໂຕ້.

1. ອົບພະຍົກຄົນ , ສັດລ້ຽງ ແລະ ຊັບສິນມີຄ່າຂອງປະຊາຊົນໄປໄວ້ບ່ອນເຂດປອດໄພ

2. ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາ , ອຸປະກອນຕ່າງໆ ທີ່ຈຳເປັນ ເພື່ອຊ່ວຍເຫຼືອປະຊາຊົນຜູ້ປະສົບໄພເຄາະຮ້າຍ

3. ສົ່ງໜ່ວຍງານແພດ ລົງຊ່ວຍເຫຼືອຄົນທີ່ປາດເຈັບພ້ອມແຈກຢາຍຢາປິ່ນປົວພະຍາດ ເບື້ອງຕົ້ນໃຫ້ປະຊາຊົນ

4. ຕິດຕາມເຝົ້າລະວັງຈຸດສ່ຽງໄພຕ່າງໆ ພ້ອມເສີມສ້າງຄູກັນນ້ຳ ເພື່ອຫຼຸດຜ່ອນຜົນກະທົບຈາການ້ຳຖ້ວມ

5. ຈັດຕັ້ງການປະຕິບັດການຄົ້ນຫາ ແລະ ກູ້ໄພ ຫາກມີກໍລະນີສຸກເສີນ ເຊັ່ນ ນ້ຳໄຫຼສຸ ຫຼື ເຫດການຮ້າຍແຮງຕ່າງໆ

6. ຕິດຕາມສະພາບອາດກາດເປັນປະຈຳ ເພື່ອຮັບຮູ້ຂໍ້ມູນຂ່າວສານອັນໃໝ່ ພ້ອມລາຍງານແຈ້ງເຕື່ອນທຸກໆໄລຍະ

7. ເກັບກຳຂໍ້ມູນ , ສະຫຼຸບສັງລວມຕີລາຄາຄວາມເສຍຫາຍເບື້ອງຕົ້ນ ເພື່ອລາຍງານຂັ້ນເທິງຊາບ

## 18. ການປັບປຸງເພື່ອໃຫ້ກັບຄືນສູ່ສະພາບເດີມ.

### 18.1 ກິດຈະກຳການປັບປຸງ ເພື່ອໃຫ້ກັບຄືນສູ່ສະພາບເດີມ.

1. ເກັບກຳຂໍ້ມູນຂັ້ນສຸດທ້າຍ ພ້ອມຕີລາຄາຄວາມເສຍຫາຍຂອງໄພນ້ຳຖ້ວມ ແລະ ຄວາມຕ້ອງການໃນການຟື້ນຟູ.

2. ປຸກລະດົມຂວາຍທຶນຮອນຈາກພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍເຫຼືອຜູ້ປະສົບໄພ

3. ນຳເຄື່ອງຊ່ວຍເຫຼືອບັນເທົາ , ອຸປະກອນຕ່າງໆ ທີ່ຈຳເປັນ ລົງແຈກຢາຍປະຊາຊົນຜູ້ປະສົບໄພ

4. ຂື້ນແຜນຊ່ວຍເຫຼືອ ແລະ ປັບປຸງບູລະນະພື້ນຖານໂຄງລ່າງທີ່ໄດ້ຮັບຜົນເສຍຫາຍ ເພື່ອໃຫ້ກັບ ຄືນສູ່ສະພາບເດີມ ໂດຍອີງໃສ່ການຕີລາຄາ ຄວາມຕ້ອງການ.

## 19. ມາດຕະການລົດຜ່ອນໄພນ້ຳຖ້ວມ

### 19.1 ກິດຈະກຳການກຽມພ້ອມທາງດ້ານໂຄງສ້າງ

1. ກໍ່ສ້າງຄັນຄູປ້ອງກັນນ້ຳຖ້ວມ, ຄອງສົ່ງນ້ຳ , ກຳນົດພື້ນທີ່ເຂດປອດໄພໃນຊຸມຊົນຢູ່ຕາມຈຸດ ຫຼືເຂດທີ່ມີຄວາມສ່ຽງສູງ

2. ເສີມສ້າງຄວາມແຂງແກ່ນໃຫ້ອາຄານ ,ບ້ານເຮືອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃນເຂດນ້ຳຖ້ວມນັ້ນ ເພື່ອໃຫ້ສາມາດຫຼຸດຜ່ອນຜົນກະທົບຈາກໄພນ້ຳຖ້ວມ

## 19.2 ກິດຈະກຳການກຽມພ້ອມບໍ່ແມ່ນທາງດ້ານໂຄງສ້າງ

1. ປຸກຈິດສຳນຶກໃຫ້ປະຊາຊົນ ແລະ ຊຸມຊົນ ເພື່ອໃຫ້ເຂົາເຈົ້າຮັບຮູ້ເຂົ້າໃຈກ່ຽວກັບໄພນ້ຳຖ້ວມ
2. ຝຶກອົບຮົມໃຫ້ພະນັກງານຄູ ພ້ອມນຳຫລັກສູດໄພພິບັດເຂົ້າໃນການຮຽນ ການສອນພາຍໃນໂຮງຮຽນ
3. ຝຶກອົບຮົມການເສີມສ້າງຄວາມອາດສາມາດ ໃຫ້ແກ່ຄະນະກຳມະການຂັ້ນເມືອງຕະຫຼອດເຖິງຄະນະກຳມະການຂັ້ນບ້ານ
4. ສ້າງແຜນທີ່ນ້ຳຖ້ວມ ແລະ ແຜນທີ່ຄວາມສ່ຽງຂອງແຂວງ , ເມືອງ ແລະ ບ້ານ

## 21 . ເລກໂທລະສັບທີ່ສຳຄັນ.

- **ສາມະຊິກຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ**

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ເບີໂທລະສັບ |
|---|---|---|---|
| 1 | ທ່ານ ສົມໃຈ ເພັດສົມບອນ | ຮອງເຈົ້າແຂວງ | 020 2329515 |
| 2 | ທ່ານ ບຸນສອນ ແສງດາວົງ | ປະທານແນວລາວສ້າງຊາດແຂວງ | 02 238487 |
| 3 | ທ່ານ ແສງທອງ ພະຄຸນທອງ | ຫົວໜ້າພະແນກ ຮສສ ແຂວງ | 020 5756621 |
| 4 | ທ່ານ ຄຳເພືອງ ເທບພະກັນ | ຮອງຫົວໜ້າພະແນກກະສິກຳ | 020 5755650 |
| 5 | ທ່ານ ສີຫາວົນ ອິນທະລາດ | ຮອງຫົວໜ້າພະແນກແຜນການ | 020 5223315 |
| 6 | ທ່ານ ເກດສະໜາ ຣາຊະຈັກ | ຮອງຫົວໜ້າພະແນກສາທາ | 020 5650200 |

- **ເບີໂທລະສັບກອງເລຂາກອງເລຂາ.**

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ເບີໂທລະສັບ |
|---|---|---|---|
| 1 | ທ່ານ ບຸນສຽງ ຊາພັກດີ | ຮອງພະແນກ ຮສສ ແຂວງ | 020 5455303 |
| 2. | ທ່ານ ນາງ ສາທິດ ຈັນສີ | ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ | 020 5550284 |
| 3 | ທ່ານ ລັດທະນົງໄຊ ວົງແກ້ວ | ວິຊາການພະແນກ ຮສສ ແຂວງ | 020 2168071 |
| 4 | ທ່ານ ບຸນມີ ສີບຸນເຮືອງ | ວິຊາການພະແນກກະສິກຳ-ປ່າໄມ້ແຂວງ | 020 5663210 |
| 5 | ທ່ານ ດຣ ໂກໃສ | ວິຊາການພະແນກສາທາແຂວງ | 020 2167457 |

**ຄຳມ່ວນ,ວັນທີ.............................** **ຄຳມ່ວນ,ວັນທີ...................**

**ຫົວໜ້າກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ** **ກອງເລຂາຂັ້ນແຂວງ**

แผนจัดตั้งปะติบัดກິດຈະກຳ 1 ປີ ( 2009 - 2010 ) ຢູ່ແຂວງຄຳມ່ວນ

| ກິດຈະກຳຈັດຕັ້ງປະຕິບັດ | ພື້ນທີ່ປະຕິບັດ ແຂວງ - ເມືອງ | ພະແນກການ ຮັບຜິດຊອບ | ເວລາຈັດຕັ້ງ ປະຕິບັດ | ງົບປະມານ ລ້ານກີບ |
|---|---|---|---|---|
| ຝຶກອົບຮົມວຽກງານຄຸ້ມຄອງໄພພິບັດ ໃຫ້ຄະນະກຳມະການຂັ້ນເມືອງ | 3 ເມືອງ | ຄພຂ ພ/ນແຮງງານແຂວງ | 2009-2010 | 30,00 |
| ຝຶກອົບຮົມວິທີການເກັບກຳ ແລະ ປະ ເມີນຂໍ້ມູນຜົນເສຍຫາຍຈາກໄພນ້ຳຖ້ວມ | 4 ເມືອງ | ຄພຂ ພ/ນແຮງງານແຂວງ | 2009-2010 | 50,00 |
| ເກັບກຳຂໍ້ມູນຜົນເສຍຫາຍນ້ຳຖ້ວມ | 9 ເມືອງ | ຄພຂ ຄພມ | 2009-2010 | 60,00 |
| ສ້ອມແປງຊົນລະປະທານ | 2 ເມືອງ | ຄພຂ ພ/ນກະສິກຳແຂວງ | 2009-2010 | 500.00 |
| ຈັດຊື້ ແລະ ສະໜອງເຄື່ອງກະຈ່າຍສຽງ ໃຫ້ບ້ານເປົ້າໝາຍ | 3 ເມືອງ | ຄພຂ ພ/ນແຮງງານແຂວງ | 2009-2010 | 50.00 |
| ສ້າງຕັ້ງໜ່ວຍງານກະຈາຍຂໍ້ມູນຂ່າວ ສານ ກ່ຽວກັບໄພນ້ຳຖ້ວມ | 4 ເມືອງ | ຄພຂ ພ/ນວັດທະນາະທຳ | 2009-2010 | 40,00 |
| ຈັດຊື້ເຄື່ອງອຸປະກອນຮັບໃຊ້ຫ້ອງການ | ແຂວງ 2 ເມືອງ | ພ/ນແຮງງານແຂວງ | 2009-2010 | 80,00 |
| ນຳຫຼັກສູດໄພພິບັດເຂົ້າໃນໂຮງຮຽນ | 2 ເມືອງ | ສຶກສາແຂວງ | 2009-2010 | 30,00 |
| ສ້າງຕັ້ງທີມງານກູ້ໄພ , ໜ່ວຍງານແພດ ຂັ້ນແຂວງ , ຂັ້ນເມືອງ | 5 ເມືອງ | ປກສ , ປກຊ | 2009-2010 | 50,00 |
| ເສີມສ້າງຄູກັນນ້ຳຕາມຈຸດຫຼໍ່ແຫຼມ | 2 ເມືອງ | ຄພຂ ພ/ນແຮງງານແຂວງ | 2009-2010 | 100,00 |
| **ລວມ :** | | | | **990,00** |

**ຄຳມ່ວນ,ວັນທີ.............................** **ຄຳມ່ວນ,ວັນທີ...................**

**ຮອງຫົວໜ້າພະແນກ ຮສສ ແຂວງ**

**ຫົວໜ້າກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ** **ກອງເລຂາຂັ້ນແຂວງ**

## ແຜນຈັດຕັ້ງປະຕິບັດກິດຈະກຳ 5 ປີ ( 2010 - 2015 ) ຢູ່ແຂວງຄຳມ່ວນ

| ກິດຈະກຳຈັດຕັ້ງປະຕິບັດ | ພື້ນທີ່ປະຕິບັດ | ພະແນກການຮັບຜິດຊອບ | ເວລາຈັດຕັ້ງປະຕິບັດ | ງົບປະມານລ້ານກີບ |
|---|---|---|---|---|
| ສ້າງຕັ້ງຄະນະຄຸ້ມຄອງໄພພິບັດຂັ້ນບ້ານ ພ້ອມທັງຝຶກອົບຮົມ | 5 ເມືອງ | ຄພຂ<br>ຄພມ | 2010-2015 | 100,00 |
| ຝຶກອົບຮົມວຽກງານຄຸ້ມຄອງໄພ ພິບັດ | 9 ເມືອງ | ພ/ນແຮງງານແຂວງ<br>ຄພຂ | 2010-2015 | 90,00 |
| ຝຶກອົບຮົມວິທີການເກັບກຳຂໍ້ມູນຜົນເສຍຫາຍຈາກໄພນ້ຳຖ້ວມ | 5 ເມືອງ | ຄພຂ<br>ຄພມ | 2010-2015 | 100,00 |
| ເກັບກຳຂໍ້ມູນຜົນເສຍຫາຍນ້ຳຖ້ວມ | 9 ເມືອງ | ຄພຂ , ຄພມ | 2010-2015 | 150,00 |
| ສ້ອມແປງຊົນລະປະທານ | 5 ເມືອງ | ຄພຂ<br>ພ/ນແຮງງານແຂວງ | 2010-2015 | 1.000,00 |
| ສ້າງຕັ້ງໜ່ວຍງານກະຈາຍຂໍ້ມູນຂ່າວສານ | 6 ເມືອງ | ຄພຂ<br>ພ/ນ ວັດທະນາທຳ | 2010-2015 | 70,00 |
| ສ້າງຫ້ອງການຄຸ້ມຄອງໄພນ້ຳຖ້ວມ | ແຂວງ | ພ/ນແຮງງານແຂວງ | 2010-2015 | 500,00 |
| ໂຄສະນາປຸກຈິດສຳນຶກກ່ຽວໄພພິບັດໃຫ້ຊຸມຊົນ | 5 ເມືອງ | ຄພຂ<br>ຄພມ | 2010-2015 | 50,00 |
| ຈັດຊື້ເຄື່ອງອຸປະກອນຮັບໃຊ້ຫ້ອງການ | ແຂວງ<br>2 ເມືອງ | ພ/ນແຮງງານແຂວງ | 2009-2010 | 80,00 |
| ສ້າງຕັ້ງໜ່ວຍງານກູ້ໄພ , ແພດ | 9 ເມືອງ | ປກສ , ປກຊ<br>ພະແນກສາທາ | 2010-2015 | 70,00 |
| ເສີມສ້າງຄູກັນນ້ຳຕາມຈຸດຫຼໍ່ແຫຼມ | 5 ເມືອງ | ຄພຂ , ຄພມ | 2010-2015 | 100,00 |
| ຈັດກອງປະຊຸມທັດສະນະຖອດຖອນບົດຮຽນ | ຕ່າງແຂວງ<br>ຕ່າງປະເທດ | ຄພຂ , ຄພມ | 2010-2015 | 200.00 |
| ນຳຫຼັກສູດໄພພິບັດເຂົ້າໃນໂຮງຮຽນ | 5 ເມືອງ | ສຶກສາແຂວງ | 2010-2015 | 50,00 |
| ຈັດກອງປະຊຸມປຶກສາຫາລື ແລກປ່ຽນບົດຮຽນລະຫວ່າງແຂວງຕໍ່ແຂວງກ່ຽວບັນຫາໄພພິບັດ | ປີລະ 2 ຄັ້ງ | ຄພຂ | 2010-2015 | 100,00 |
| ສະໜອງເຄື່ອງກະສຽງໃຫ້ເມືອງ ແລະບ້ານເປົ້າໝາຍ | 5 ເມືອງ | ຄພຂ<br>ພ/ນແຮງງານແຂວງ | 2010-2015 | 70,00 |
| ຂະຫຍາຍການຝຶກອົບຮົມວຽກງານຄຸ້ມຄອງໄພພິບັດພາຍໃນໂຮງຮຽນ | 9 ເມືອງ | ສຶກສາແຂວງ<br>ພ/ນແຮງງານແຂວງ | 2010-2015 | 70,00 |
| ສ້າງຕັ້ງກອງທຶນພັດທະນາບ້ານ | 5 ເມືອງ | ພ/ນແຮງງານແຂວງ | 2010-2015 | 200,00 |
| ລວມ : | | | | 3.000.00 |

**ຄຳມ່ວນ,ວັນທີ............................** **ຄຳມ່ວນ,ວັນທີ..................**

**ຮອງຫົວໜ້າພະແນກ ຮສສ ແຂວງ**

**ຫົວໜ້າກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ** **ກອງເລຂາຂັ້ນແຂວງ**